# ການກ່ຽວພັນ ຣະຫວ່າງ ພຣະເຈົ້າກັບມະນຸດ
# RELATIONSHIP BETWEEN GOD AND MAN

## ພາກ 1- ວ່າດ້ວຍພຣະເຈົ້າ GOD

### 1/ ພຣະເຈົ້າຄືໃຜ ? Who is God?

### - ຄືຜູ້ສ້າງຟ້າສວັນ ແຜ່ນດິນໂລກ ທະເລ ແລະທຸກສິ່ງທີ່ມີຢູ່ໃນສານແຫ່ງນີ້.

ປະຖົມມະການ 1:1 "ເມື່ອຕົ້ນເດີມນັ້ນ ພຣະເຈົ້າໄດ້ຊົງເນຣະມິດ ສ້າງແຜ່ນດິນໂລກ ແລະສັພທຸກສິ່ງໃນທ້ອງຟ້ານັ້ນ."

ໂກໂລຊາຍ 1:16-17 "ເພາະວ່າໃນພຣະອົງ ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນ ທັງໃນທ້ອງຟ້າ ແລະເທິງແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ແລະທີ່ເຫັນບໍ່ໄດ້ ຈະເປັນພຣະທີ່ນັ່ງຫຼືເປັນອານຸພາບ ເປັນຜູ້ປົກຄອງຫຼືຜູ້ມີອຳນາດ ສິ່ງທັງປວງເຫຼົ່ານີ້ ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງ ແລະສຳຣັບພຣະອົງ."

ພຣະນິມິດ 4:11 "ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະອົງທັງຫຼາຍ ພຣະອົງຊົງສົມຄວນທີ່ຈະ ໄດ້ຮັບຄຳສັຣເສີນ, ພຣະກຽດ, ແລະຣິດເດດ ເພາະວ່າພຣະອົງໄດ້ຊົງສ້າງສັພສິ່ງທັງປວງ ແລະສັພສິ່ງທັງປວງນັ້ນ ກໍໄດ້ຊົງສ້າງ ຂຶ້ນແລ້ວແລະດຳຣົງຢູ່ຕາມຊອບພຣະທັຍພຣະອົງ."

ເອຊາຢາ 45:12 "ເຮົາເປັນຜູ້ສ້າງໂລກ ແລະສ້າງມະນຸດໃຫ້ອາສັຍຢູ່ທີ່ນັ້ນ ເຮົາກາງທ້ອງຟ້າອອກດ້ວຍຣິດເດດ ຂອງເຮົາ ເຮົາບັງຄັບບັນຊາຕາເວັນແລະເດືອນດາວ."

### - ຄືຜູ້ທີ່ຊົງເປັນຢູ່ດ້ວຍພຣະອົງເອງ ແລະດຳຣົງຢູ່ຕລອດໄປເປັນນິດ.

ເພງສັຣເສີນ 90:2 "ພຣະອົງຊົງເປັນພຣະເຈົ້າອົງຊື່ອນິຣັນ ບໍ່ມີກົກແລະບໍ່ມີປາຍ ກ່ອນສ້າງພູຜາທັງຫຼາຍ ແລະພື້ນແຜ່ນດິນໂລກນີ້."

ໂຢຮັນ 5:27 "ເພາະວ່າພຣະບິດາຊົງພຣະຊົນໃນພຣະອົງເອງຢ່າງໃດ ພຣະອົງກໍໄດ້ຊົງປະທານໃຫ້ພຣະບຸດຊົງ ພຣະຊົນໃນພຣະອົງເອງຢ່າງນັ້ນ."

ເອຊາຢາ 44:6 "ເຮົາເປັນຜູ້ຕົ້ນ ເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວ ບໍ່ມີພຣະອື່ນນອກຈາກເຮົາ."

### - ເປັນຜູ້ຊົງຣິດທານຸພາບສູງສຸດ

**ເໜືອທັມມະຊາດ:**

ໂຢບ 42: 2 "ຂ້າແດ່ພຣະເຈົ້າ ຂ້ານ້ອຍຮູ້ວ່າພຣະອົງຊົງເດຊານຸພາບສູງສຸດ ພຣະອົງຊົງກະທຳທຸກສິ່ງໄດ້."

ເພງສັຣເສີນ 107: 24-29 "ພວກເຂົາໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າຊົງກະທຳ ຄືກິຈການອັນອັສຈັນຂອງພຣະອົງຢູ່ເທິງທະເລ. ເມື່ອພຣະອົງຊົງສັ່ງ ລົມອັນແຮງກ້າກໍເລີ່ມພັດແລະເຮັດໃຫ້ຄື້ນນໍ້າທະເລຟອງຂຶ້ນ ເຮືອໄດ້ຖືກໂຍກຂຶ້ນໂຍກລົງຕາມຣະດັບນໍ້າ ໃນເວລາອັນຕະຣາຍເຊັ່ນນີ້ ມະນຸດໄດ້ຂາດຄວາມກ້າຫານ ພວກເຂົາໄດ້ເຕະສະດຸດ ແລະຍ່າງໂຊເຊ ເໝືອນຄົນເມົາເຫຼົ້າ ຄວາມຊຳນານຂອງພວກເຂົາກໍຊ່ວຍຫຍັງບໍ່ໄດ້. ເມື່ອມີຄວາມທຸກລຳບາກ ພວກເຂົາໄດ້ຮ້ອງຫາ ພຣະຜູ້ເປັນເຈົ້າ ພຣະອົງກໍຊົງຊ່ວຍພວກເຂົາໃຫ້ພົ້ນຈາກຄວາມທຸກໂສກ. ພຣະອົງຊົງກະທຳໃຫ້ພາຍຸງຽບສະຫງັດ ແລະຟອງນໍ້າກໍມິດງຽບລົງ."

**ເໜືອມະນຸດ:**

ຢາໂກໂບ 4:13-15 "ດັ່ງນັ້ນແຫຼະ, ເຈົ້າທັງຫຼາຍທີ່ເຄີຍເວົ້າວ່າ, "ມື້ນີ້ຫຼືມື້ອື່ນ ພວກເຮົາຈະເຂົ້າໄປໃນເມືອງນີ້, ຈະພັກຢູ່ທີ່ນັ້ນປີນຶ່ງ, ແລະຈະຄ້າຂາຍເອົາກຳໄຣ." ແຕ່ພວກເຈົ້າບໍ່ຮູ້ເລື້ອງຂອງມື້ອື່ນ ວ່າຊີວິດຂອງພວກເຈົ້າຈະເປັນໄປຢ່າງໃດ ກໍເປັນເໝືອນນ້ຳໝອກທີ່ປາກົດຢູ່ຊົ່ວຄາວ ແລ້ວກໍຫາຍໄປ. ແທນທີ່ຈະເວົ້າຢ່າງນັ້ນ ພວກເຈົ້າຄວນເວົ້າວ່າ, "ຖ້າພຣະເຈົ້າຊົງເຫັນຊອບ ພວກເຮົາຈະມີຊີວິດຢູ່ ແລະຈະເຮັດສິ່ງນີ້ຫຼືສິ່ງນັ້ນ.""

ມັດທາຍ 19:26 "ຝ່າຍມະນຸດກໍເຫຼືອກຳລັງທີ່ຈະເຮັດໄດ້ ແຕ່ຝ່າຍພຣະເຈົ້າຊົງທຳໄດ້ທຸກສິ່ງ."

**ເໜືອເຫຼົ່າເທວະດາທັງປວງ:**

ເຮັບເຣີ 1:13-14 "ນອກຈາກນັ້ນ ພຣະອົງຊົງເຄີຍກ່າວແກ່ເທວະດາຕົນໃດວ່າ, "ຈົ່ງນັ່ງເບື້ອງຂວາມືຂອງເຮົາ ຈົນກວ່າເຮົາຈະປາບສັດຕຣູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ." ຝູງເທວະດາທັງປວງນັ້ນ ແມ່ນວິນຍານຮັບໃຊ້ທີ່ພຣະເຈົ້າໄດ້ມາບົວຣະບັດບັນດາຜູ້ທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍຣະດົກ ບໍ່ແມ່ນຫຼື."

**ເໜືອພະຍາມານ:**

ໂຢບ 1:12 "ພຣະຜູ້ເປັນເຈົ້າຊົງບອກພະຍາມານວ່າ "ແມ່ນແລ້ວ, ທຸກສິ່ງທີ່ໂຢບມີນັ້ນ ເຈົ້າເອົາໄປໄດ້ ແຕ່ຢ່າທຳຮ້າຍລາວ" ແລ້ວພະຍາມານໄດ້ອອກໄປຈາກພຣະພັກພຣະເຈົ້າ."

**ສະລຸບ.** ເອຊາຢາ 59:1-2 "ຈົ່ງເບິ່ງເຖີດ, ພຣະຫັດຂອງພຣະເຈົ້າບໍ່ໄດ້ສັ້ນເກີນທີ່ຈະຊ່ວຍໃຫ້ລອດໄດ້ ຫຼືພຣະກອນຂອງພຣະອົງບໍ່ໄດ້ໜວກຈົນບໍ່ອາດໄດ້ຍິນ. ແຕ່ວ່າຄວາມບາບຊົ່ວຂອງເຈົ້າທັງຫຼາຍໄດ້ກະທຳນັ້ນ ໄດ້ເຮັດໃຫ້ເກີດການ ແຕກ ແຍກ ຣະຫວ່າງ ເຈົ້າກັບພຣະເຈົ້າ ແລະບາບຂອງເຈົ້າທັງຫຼາຍໄດ້ບັງພຣະພັກຂອງພຣະອົງໄປເສັຽຈາກເຈົ້າ ພຣະອົງຈຶ່ງບໍ່ໄດ້ຍິນ."

ພຣະເຈົ້າຄືຜູ້ຊົງມີຣິດທານຸພາບສູງສຸດ ເປັນພຣະເຈົ້າເໜືອເຈົ້າທັງປວງ ກ່ອນ ຫຼືຫຼັງພຣະອົງຈະບໍ່ມີພຣະເຈົ້າ ອົງອື່ນອີກ. ພຣະອົງຊົງເປັນຢູ່ຢ່າງນີ້ຕລອດໄປ. ທຸກສິ່ງ ຢູ່ໃຕ້ການບັນຊາ ແລະໃຕ່ອຳນາດຂອງພຣະອົງ. ບໍ່ມີຫຍັງທີ່ຈະຍິ່ງໃຫຍ່ ໄປກວ່າພຣະເຈົ້າ. ພຣະອົງຊົງເປັນເຈົ້າຂອງສວັນ ແຜ່ນດິນໂລກ ແລະທົ່ວພິພົບ. ຊົງເປັນພຣະເຈົ້າອົງດຽວ ແລະບໍ່ມີພຣະເຈົ້າອົງອື່ນອີກນອກຈາກພຣະອົງ. ເປັນພຣະເຈົ້າຜູ້ຊົງຮັກ ແລະຫວງແຫນມະນຸດທຸກຄົນ. "ເຮົາເປັນພຣະເຈົ້າ ແຕ່ພຽງອົງດຽວ ບໍ່ມີພຣະອື່ນອີກນອກຈາກເຮົາ."

## 2/ ພຣະເຈົ້າທ່ຽງແທ້ມີຈັກອົງ ແລະຊົງມີພຣະລັກສະນະຢ່າງໃດ ?

God and His appearance.

### - ພຣະເຈົ້າທ່ຽງແທ້ ມີພຽງອົງດຽວ.

ເອຊາຢາ 44:6-7 "ເຮົາເປັນຜູ້ຕົ້ນ ເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວ ເພາະບໍ່ມີພຣະເຈົ້າອື່ນນອກຈາກເຮົາ ມີໃຜແດ່ເຮັດໄດ້ຄືເຮົາ? ແລະບອກເຫດການຕັ້ງແຕ່ເລີ່ມຕົ້ນທີ່ເຮົາສ້າງໂລກ ຈົນເຖິງເວລາສຸດທ້າຍໄດ້ຢ່າງຖືກຕ້ອງ?"

ເອຊາຢາ 45:22 "ມະນຸດທຸກມູມໂລກເອີຍ ຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ອຍໃຫ້ພົ້ນເຖີ້ນ ເຮົາເປັນພຣະເຈົ້າ ແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນ.."

1 ຕີໂມທຽວ 2:5 "ດ້ວຍເຫດວ່າມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວຣະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິສຜູ້ຊົງສະພາບເປັນມະນຸດ."

### - ຊົງມີພຣະລັກສະນະເປັນພຣະວິນຍານ.

ໂຢຮັນ 1:18 "ບໍ່ມີໃຜໄດ້ເຫັນພຣະເຈົ້າຈັກເທື່ອ ແຕ່ພຣະບຸດອົງດຽວ ຜູ້ຊົງເປັນພຣະເຈົ້າ ຊຶ່ງຊົງສະຖິດຢູ່ໃນ ພຣະຊວງ ຂອງພຣະບິດາ ພຣະອົງນັ້ນແຫຼະ, ໄດ້ຊົງສະແດງໃຫ້ຮູ້."

ໂຢຮັນ 4:24 "ພຣະເຈົ້າຊົງເປັນພຣະວິນຍານ ແລະຜູ້ທີ່ນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານ ແລະຄວາມຈິງ"

ລູກາ 24:39 "ຈົ່ງເບິ່ງມືແລະຕີນຂອງເຮົາວ່າແມ່ນເຮົາເອງ ຈົ່ງຄຳເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອ ບໍ່ມີກະດູກ ເໝືອນກັບທ່ານເຫັນເຮົາມີຢູ່ນີ້."

## - ຮູບແບບການປາກົດຂອງພຣະເຈົ້າທີ່ສາມາດເຫັນໄດ້ດ້ວຍຕາ.

ໂຢຮັນ 1:32 "ແລະໂຢຮັນກ່າວເປັນພະຍານວ່າ "ເຮົາໄດ້ເຫັນພຣະວິນຍານເໝືອນດັ່ງນົກເຂົາ ສະເດັດລົງມາ ຈາກຟ້າສວັນແລະຊົງສະຖິດຢູ່ເທິງທ່ານ."

ເຮັບເຣີ 1:7 "ສ່ວນເທວະດາເຫຼົ່ານັ້ນ ພຣະອົງຊົງກ່າວວ່າ "ພຣະອົງຊົງບັນດານໃຫ້ເທວະດາຂອງພຣະອົງ ເປັນເໝືອນລົມແລະຊົງບັນດານໃຫ້ພວກຜູ້ຮັບໃຊ້ຂອງພຣະອົງເປັນເໝືອນແປວໄຟ."

ອົພຍົບ 24: 9-10 "ໂມເຊ ອາໂຣນ ນາດາບ ອາບີຮູ ແລະພວກຫົວໜ້າເຈັດສິບຄົນຂອງຊາວອິສຣາເອນ ໄດ້ຂຶ້ນໄປ ເທິງພູພວກເຂົາໄດ້ເຫັນພຣະເຈົ້າຂອງຊາວອິສຣາເອນ ຢູ່ລຸ່ມພຣະບາດຂອງພຣະອົງ ມີສິ່ງນຶ່ງເບິ່ງເໝືອນແກ້ວໄພທູນ ມີສີແຈ່ມໃສເໝືອນກັບທ້ອງຟ້າ."

ອົພຍົບ 33:18-23 "ໂມເຊໄດ້ທູນຂໍວ່າ "ຂໍໂຜດສະແດງພຣະຣັສມີ ຄວາມຍິ່ງໃຫຍ່ຂອງພຣະອົງໃຫ້ຂ້ານ້ອຍ ໄດ້ເບິ່ງແດ່ທ້ອນ." ພຣະຜູ້ເປັນເຈົ້າຊົງຕອບວ່າ "ເຮົາຈະເຮັດໃຫ້ຄຸນງາມຄວາມດີຂອງເຮົາທັງໝົດ ປະຈັກແຈ້ງຕໍ່ໜ້າເຈົ້າ ແລະເຮົາຈະປະກາດຊື່ຂອງເຮົາ ຄືພຣະຜູ້ເປັນເຈົ້າໃຫ້ເຈົ້າໄດ້ຍິນ ເຮົາຈະສະແດງຄວາມເມດຕາສົງສານ ຕໍ່ຜູ້ທີ່ເຮົາປະສົງຈະໃຫ້" ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປວ່າ "ເຈົ້າຈະບໍ່ເຫັນໜ້າເຮົາ ເພາະວ່າມະນຸດນັ້ນ ເຫັນໜ້າເຮົາຈະຕ້ອງຕາຍ" ພຣະອົງຊົງກ່າວຕໍ່ໄປວ່າ "ເບິ່ງດູ ໃນບ່ອນນີ້ ມີບ່ອນນຶ່ງຢູ່ໃກ້ເຮົາ ເຈົ້າຈົ່ງໄປຢືນຢູ່ເທິງຫີນ ໃນທີ່ນັ້ນ ເມື່ອຣັສມີ ຄວາມຍິ່ງໃຫຍ່ຂອງເຮົາຜ່ານໄປໃກ້ ເຮົາຈະເຊື່ອງເຈົ້າໄວ້ໃນຊ່ອງຫີນແລະຈະເອົາ ມືເຮົາປິດບັງເຈົ້າໄວ້ ຈົນກວ່າເຮົາຈະຜ່ານພົ້ນໄປແລ້ວ ແລ້ວເຮົາຈະເອົາມືເຮົາອອກ ເຈົ້າຈະເຫັນຫຼັງຂອງເຮົາ ແຕ່ໜ້າຂອງເຮົານັ້ນເບິ່ງບໍ່ໄດ້."

ປະຖົມການ 18:1-2 "ພຣະຜູ້ເປັນເຈົ້າໄດ້ປາກົດແກ່ອັບຣາຮາມທີ່ຕົ້ນໄມ້ສັກສິດຂອງມັມເຣ ຂະນະທີ່ເພິ່ນນັ່ງຢູ່ທີ່ປະຕູເຕັນເວລາແດດຮ້ອນ ເມື່ອອັບຣາຮາມເງີຍໜ້າຂຶ້ນ ກໍເຫັນຊາຍສາມຄົນຢືນຢູ່ທາງໜ້າເພິ່ນ ເມື່ອເຫັນເຂົາ ເພິ່ນຈຶ່ງຟ້າວລຸກຂຶ້ນ."

**ສະລູບ.** ພຣະເຈົ້າຊົງເປັນພຣະວິນ ຊຶ່ງເຮົາບໍ່ສາມາດເຫັນໄດ້ດ້ວຍຕາ ແຕ່ພຣະອົງກໍຊົງສະແດງພຣະອົງເອງໃຫ້ເຮົາ ໄດ້ເຫັນໂດຍຜ່ານທາງເຫດການຕ່າງໆທີ່ເກີດຂຶ້ນໃນທັມມະຊາດ ຜ່ານພຣະບຸດຂອງພຣະອົງຄືພຣະເຢຊູຄຣິສ ຜ່ານອັຄສາວົກ ຜ່ານທຸກຄົນທີ່ເຊື່ອໃນພຣະເຈົ້າ ແລະຜ່ານສາສນາຕ່າງໆທີ່ເວົ້າກ່ຽວກັບ "ສວັນ-ນາຮົກ" ແລະຜ່ານຈິດສຳນຶກຂອງມະນຸດທຸກຄົນ.

## 3/ ສາມພຣະພາກຂອງພຣະເຈົ້າ. Triune God.

ໂຢຮັນ 1:1-4, 9-14 "ເມື່ອຕົ້ນເດີມນັ້ນ ພຣະທັມຊົງເປັນຢູ່ແລ້ວ ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທັມນັ້ນແຫຼະຊົງເປັນພຣະເຈົ້າ. ເມື່ອຕົ້ນເດີມນັ້ນ ພຣະທັມຊົງສະຖິດຢູ່ກັບພຣະເຈົ້າ. ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາ ໂດຍພຣະທັມໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ. ພຣະທັມນັ້ນຊົງມີຊີວິດໃນ ພຣະອົງເອງ ແລະຊີວິດນັ້ນເປັນຄວາມສວ່າງຂອງມະນຸສໂລກ. ຄວາມສວ່າງກໍສ່ອງເຂົ້າມາໃນຄວາມມືດ ແລະຄວາມມືດນັ້ນ ບໍ່ໄດ້ຊະນະຕໍ່ຄວາມສວ່າງ..... ອັນນີ້ຄືຄວາມສວ່າງອັນແທ້ຈິງ ທີ່ຂະນະນັ້ນກຳລັງເຂົ້າມາໃນໂລກແລະສ່ອງເຖິງຄົນທັງປວງ. ພຣະອົງຊົງສະຖິດຢູ່ໃນໂລກຊຶ່ງພຣະເຈົ້າໄດ້ຊົງສ້າງຂຶ້ນດ້ວຍພຣະອົງນັ້ນ ແຕ່ໂລກບໍ່ຮູ້ຈັກພຣະອົງ. ພຣະອົງໄດ້ສະເດັດມາຍັງ ບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງ. ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍປະທານສິດ

ໃຫ້ກາຍເປັນບຸດຂອງພຣະເຈົ້າ, ຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອ ຫຼືກາມ ຫຼືຄວາມປະສົງຂອງມະນຸດ ແຕ່ເກີດຈາກພຣະເຈົ້າ. ພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາສັຍຢູ່ທ່າມກາງ ເຮົາທັງຫຼາຍ ບໍຣິບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫຼາຍ ໄດ້ເຫັນສງ່າຣາສີຂອງພຣະອົງ ຄືສງ່າຣາສີ ອັນສົມກັບ ພຣະບຸດອົງດຽວຂອງພຣະເຈົ້າ."

ໃນພຣະທັມນີ້ ເຮົາໄດ້ເຫັນວ່າ ການສ້າງສັພສິ່ງຂອງພຣະເຈົ້າ ບໍ່ແມ່ນພຽງຜູ້ດຽວເຮັດ ແຕ່ມີທັງ ພຣະບິດາ ພຣະທັມທີ່ລົງມາເກີດເປັນມະນຸດ ແລະແສງສວ່າງທີ່ເປັນຊີວິດຄືພຣະວິນຍານບໍຣິສຸດນັ້ນຮ່ວມກັນ ຊຶ່ງເອີ້ນວ່າ "ພຣະເຈົ້າ"
ພຣະເຈົ້າ ໄດ້ແຍກອອກເປັນສາມພຣະພາກ. ຄຳວ່າ "ອົງດຽວ" ຫຼື "ເປັນເອກ" ພາສາ ເຮັບເຣີ ແປວ່າ "ການຮວມກັນເປັນອັນນຶ່ງອັນດຽວກັນ" ບໍ່ໄດ້ໝາຍເຖິງສະພາບທີ່ຢູ່ໂດດດ່ຽວ. ດັ່ງນັ້ນ ພຣະຄຳພີຈຶ່ງໄດ້ບອກວ່າ "ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ແລະພຣະທັມນັ້ນຊົງເປັນພຣະເຈົ້າ, ຊີວິດໃນພຣະທັມ ກໍກາຍເປັນ ແສງສວ່າງຂອງໂລກ ຊຶ່ງເອີ້ນວ່າ ພຣະວິນຍານແຫ່ງຄວາມຈິງ ແລະນັ້ນກໍແມ່ນພຣະເຈົ້າເຊັ່ນກັນ". ຄຳວ່າ "ພຣະເຈົ້າ" ໃນທີ່ນີ້ ຈຶ່ງໝາຍເຖິງ ພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ, ແລະພຣະເຈົ້າພຣະວິນຍານບໍຣິສຸດ. ທັງສາມຮວມກັນ ເອີ້ນວ່າ "ຕຣີເອກະນຸພາບ" "ສາມເປັນນຶ່ງ" ເອີ້ນວ່າ "ພຣະເຈົ້າ" ຊຶ່ງບໍ່ສາມາດແຍກຈາກກັນໄດ້. ທຸກເຫດການ ທຸກການກະທຳຂອງພຣະເຈົ້າ ຊົງພົວພັນກັນ ແລະບໍ່ສາມາດແຍກຈາກກັນໄດ້.

## - ພຣະເຈົ້າພຣະບິດາ.

ເອຊາຢາ 43:10 "ຊາວອິສຣາເອນເອີຍ, ເຈົ້າເປັນພະຍານຂອງເຮົາ ເຮົາເລືອກເອົາເຈົ້າເປັນຊົນຊາດຮັບໃຊ້ເຮົາ ເພື່ອເຈົ້າຈະເຊື່ອໃນຕົວເຮົາແລະຮູ້ຈັກວ່າ ເຮົາເທົ່ານັ້ນທີ່ເປັນພຣະເຈົ້າ ນອກຈາກເຮົາແລ້ວ ບໍ່ມີພຣະເຈົ້າອົງອື່ນອີກ ກ່ອນແລະຫຼັງເຮົາ ບໍ່ເຄີຍມີພຣະເຈົ້າຈັກເທື່ອ."

ເອຊາຢາ 45:5, 12, 18 "ເຮົາເປັນພຣະຜູ້ເປັນເຈົ້າ ບໍ່ມີພຣະເຈົ້າອົງອື່ນອີກ ເຖິງແມ່ນເຈົ້າບໍ່ຮູ້ຈັກເຮົາ ເຮົາກໍຈະໃຫ້ອຳນາດແກ່ເຈົ້າ..... ເຮົາເປັນຜູ້ສ້າງໂລກ ແລະສ້າງມະນຸດທີ່ອາສັຍຢູ່ທີ່ນັ້ນ ເຮົາກາງຟ້າສວັນອອກດ້ວຍຣິດເດດຂອງເຮົາ ເຮົາບັງຄັບບັນຊາດາເວັນ ແລະດວງດາວ.... ພຣະຜູ້ເປັນເຈົ້າຊົງສ້າງຟ້າສວັນພຣະອົງດຽວ ເປັນພຣະເຈົ້າ ຊົງປັ້ນແຕ່ງໂລກໃຫ້ໝັ້ນຄົງ ພຣະອົງບໍ່ໄດ້ຊົງສ້າງມັນໃຫ້ຫວ້າງເປົ່າ ແຕ່ໃຫ້ຄົນອາສັຍຢູ່ ແມ່ນວ່າພຣະອົງຊົງກ່າວວ່າ "ເຮົາເປັນພຣະເຈົ້າ ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ"

ມັດທາຍ 7:21 "ບໍ່ແມ່ນໝົດທຸກຄົນທີ່ກ່າວແກ່ເຮົາວ່າ "ພຣະອົງເຈົ້າ, ພຣະອົງເຈົ້າ" ຈະໄດ້ເຂົ້າໃນແຜ່ນດິນສວັນ ເຂົ້າໄດ້ແຕ່ຜູ້ທີ່ເຮັດຕາມນ້ຳພຣະທັຍພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນ."

ມັດທາຍ 10:33 ແຕ່ບັນດາຜູ້ທີ່ປະຕິເສດເຮົາຕໍ່ໜ້າມະນຸດ ຝ່າຍເຮົາກໍຈະປະຕິເສດຜູ້ນັ້ນ ຕໍ່ໜ້າພຣະບິດາຂອງເຮົາຜູ້ຊົງ ສະຖິດຢູ່ໃນສວັນເໝືອນກັນ."

ໂຢຮັນ 3:35-36 "ພຣະບິດາຊົງຮັກພຣະບຸດ ແລະຊົງມອບທຸກສິ່ງໄວ້ໃນພຣະຫັດຂອງພຣະອົງ. ຜູ້ທີ່ວາງໃຈໃນ ພຣະບຸດ ກໍມີຊີວິດຕລອດໄປເປັນນິດຜູ້ທີ່ບໍ່ເຊື່ອຟັງພຣະບຸດກໍຈະບໍ່ໄດ້ເຫັນຊີວິດແຕ່ພຣະພິໂຣດຂອງພຣະເຈົ້າປົກຄຸມ ຢູ່ເທິງຜູ້ນັ້ນ

## - ພຣະເຈົ້າພຣະບຸດ:

ເອຊາຢາ 7:14 "ດ້ວຍເຫດນັ້ນ ພຣະຜູ້ເປັນເຈົ້າຈຶ່ງຈະຊົງສະແດງໝາຍສຳຄັນໃຫ້ເຈົ້າເຫັນດັ່ງນີ້ ຄືຍິງສາວຄົນນຶ່ງ ຈະຖືພາ ແລະອອກລູກມາເປັນຊາຍ ນາງຈະຕັ້ງຊື່ໃຫ້ລູກນີ້ວ່າ "ເອມານູເອນ". (ພາສາເຮັບເຣີ=ພຣະເຈົ້າຊົງຢູ່ນຳເຮົາ)

ມັດທາຍ 1:20-23 "ແຕ່ເມື່ອໂຢເຊບຍັງຄຶດໃນເລື້ອງນີ້ຢູ່ ກໍມີເທວະດາຕົນນຶ່ງຂອງພຣະເຈົ້າມາປາກົດແກ່ໂຢເຊບໃນຄວາມຝັນວ່າ, "ໂຢເຊບ ບຸດດາວິດເອີຍ, ຢ່າຊູ່ຢ້ານທີ່ຈະຮັບນາງມາຣີອາມາເປັນເມັຽຂອງເຈົ້າ ເພາະວ່າຜູ້ຊຶ່ງປະຕິສົນທິ ໃນທ້ອງຂອງນາງ ກໍເປັນໂດຍເດດພຣະວິນຍານບໍຣິສຸດ. ນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າ ທ່ານຜູ້ນີ້ແຫຼະ,

ຈະເປັນຜູ້ໂຜດໄຜ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ." ການທັງປວງນີ້ ເກີດຂຶ້ນເພື່ອຈະໃຫ້ ສຳເຣັດຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ດ້ວຍຜູ້ປະກາດພຣະທັມວ່າ "ເບິ່ງແມ, ຍິງພົມຈາຣີນັ້ນຈະມີທ້ອງ ແລະປະສູດບຸດ ຄົນນຶ່ງ ແລະເຂົາຈະເອີ້ນຊື່ບຸດນັ້ນວ່າ ເອມານູເອນ" (ແປວ່າ "ພຣະເຈົ້າຊົງສະຖິດຢູ່ນຳເຮົາທັງຫຼາຍ")

ໂຢຮັນ 1:14 "ພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາສັຍຢູ່ທ້າມກາງເຮົາທັງຫຼາຍ ບໍຣິບູນດ້ວຍພຣະຄຸນ ແລະຄວາມຈິງ ເຮົາທັງຫຼາຍໄດ້ເຫັນສງ່າຣາສີຂອງພຣະອົງ ຄືສງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະບິດາ."

ໂຢຮັນ 3:16 "ເພາະວ່າ ພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈ ເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ."

ມັດທາຍ 3:16-17 "ຄັນພຣະອົງຊົງຮັບບັບຕິສມາແລ້ວ ກໍສະເດັດຂຶ້ນຈາກນ້ຳທັນທີ ແລ້ວເບິ່ງແມ້, ທ້ອງຟ້າ ກໍໄຂອອກ (ແກ່ພຣະອົງ)ແລະພຣະອົງຊົງເຫັນພຣະວິນຍານຂອງພຣະເຈົ້າເໝືອນດັ່ງນົກເຂົາ ສະເດັດລົງມາສະຖິດ ຢູ່ເທິງທ່ານ. ແລະເບິ່ງແມ, ມີພຣະສຸຣະສຽງຈາກຟ້າສວັນຊົງກ່າວວ່າ, "ທ່ານຜູ້ນີ້ ເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫຼາຍໃນທ່ານ"."

ມັດທາຍ 8:29 "ເບິ່ງແມ ເຂົາຮ້ອງໃສ່ທູນພຣະອົງວ່າ "ໂອ ບຸດພຣະເຈົ້າເອີຍ, ທ່ານມາຍຸ້ງກ່ຽວກັບພວກເຮົາດ້ວຍເຫດໃດ ຈະມາທໍຣະມານເຮົາກ່ອນເວລາກຳໜົດຫຼື?."

ໂຢຮັນ 1:34 "ແລະເຮົາໄດ້ເຫັນແລ້ວ ຈຶ່ງເປັນພະຍານວ່າ ທ່ານຜູ້ນີ້ແຫຼະ, ເປັນພຣະບຸດຂອງພຣະເຈົ້າ."

ໂຢຮັນ 4:25-26 "ນາງທູນພຣະອົງວ່າ "ຂ້ານ້ອຍຊາບວ່າ ພຣະເມຊີອາ (ທີ່ເອີ້ນວ່າພຣະຄຣິສ) ຈະສະເດັດມາ ເມື່ອພຣະອົງສະເດັດມາ ແລ້ວພຣະອົງຈະຊົງຊີ້ແຈງທຸກສິ່ງແກ່ພວກຂ້ານ້ອຍ." ພຣະເຢຊູຊົງກ່າວກັບນາງວ່າ "ເຮົາ ຜູ້ທີ່ເວົ້າກັບເຈົ້າຢູ່ນີ້ແຫຼະ, ຄືທ່ານຜູ້ນັ້ນ."

ໂຢຮັນ 14:6-7 "ພຣະເຢຊູຊົງຕອບລາວວ່າ "ເຮົານີ້ແຫຼະ ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ ນອກຈາກມາທາງເຮົາ. ຖ້າທ່ານທັງຫຼາຍຮູ້ຈັກເຮົາແລ້ວ ທ່ານກໍຄົງຮູ້ຈັກພຣະບິດາຂອງເຮົາເໝືອນກັນ ຕັ້ງແຕ່ນີ້ໄປທ່ານທັງຫຼາຍກໍຮູ້ຈັກພຣະອົງ ແລະໄດ້ເຫັນພຣະອົງ."

## - ພຣະເຈົ້າ ພຣະວິນຍານບໍຣິສຸດ:

ໂຢບ 33:4 "ພຣະວິນຍານຂອງພຣະເຈົ້າ ໄດ້ສ້າງຂ້າພະເຈົ້າ ແລະພຣະອົງໃຫ້ຊີວິດແກ່ຂ້າພະເຈົ້າ."

ໂຢຮັນ 15:26 "ແຕ່ເມື່ອອົງພຣະຜູ້ຊ່ວຍ ຜູ້ທີ່ເຮົາຈະໃຊ້ມາຈາກພຣະບິດາຫາທ່ານທັງຫຼາຍ ຄືພຣະວິນຍານແຫ່ງ ຄວາມຈິງ ຊຶ່ງອອກຈາກພຣະບິດາ ໄດ້ສະເດັດມາແລ້ວ, ພຣະອົງນັ້ນແຫຼະ ຈະຊົງເປັນພະຍານແກ່ເຮົາ."

ໂຢຮັນ 16:7-8, 13-14 "ຢ່າງໃດກໍຕາມ, ເຮົາບອກຄວາມຈິງຕໍ່ທ່ານທັງຫຼາຍວ່າ ການທີ່ເຮົາຈາກໄປນັ້ນເປັນປະໂຫຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ວຍນັ້ນຈະບໍ່ໄດ້ສະເດັດມາຫາພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍຈະໃຊ້ພຣະອົງນັ້ນມາຫາພວກທ່ານ. ເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫຼະ, ຈະຊົງບັນດານໃຫ້ໂລກຮູ້ແຈ້ງໃນເລື້ອງຄວາມຜິດບາບ, ຄວາມຊອບທັມ, ແລະການພິພາກສາ..... ແຕ່ເມື່ອພຣະອົງນັ້ນ ຄືພຣະວິນຍານແຫ່ງຄວາມຈິງສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫຼາຍໄປສູ່ຄວາມຈິງທັງໝົດ. ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງໄດ້ຍິນ ສິ່ງໃດ ກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດແກ່ທ່ານທັງຫຼາຍຮູ້ເຖິງສິ່ງເຫຼົ່ານີ້ທີ່ຈະເກີດຂຶ້ນ. ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພຣະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາປະກາດແກ່ທ່ານທັງຫຼາຍ."

ໂຢຮັນ 14:16-17 "ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ວຍອີກຜູ້ນຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດ, ຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ ເພາະໂລກບໍ່ເຫັນ ແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫຼາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ."

1 ໂກຣິນໂທ 12:11 "ສິ່ງສາຣະພັດເຫຼົ່ານີ້ ພຣະວິນຍານອົງດຽວກັນຊົງບັນດານ ແລະປະທານແກ່ທຸກຄົນຕາມຊອບ ພຣະທັຍຂອງພຣະອົງ."

ເນເຫະມີ 9:20 "ພຣະອົງປະທານພຣະວິນຍານໃຫ້ສັ່ງສອນເຂົາ ແລະບໍ່ໄດ້ຊົງຢັບຢັ້ງມານາຂອງພຣະອົງ ຈາກປາກຂອງເຂົາທັງຫຼາຍ ແລະປະທານນ້ຳແກ້ກະຫາຍໃຫ້ເຂົາ."

ເອເຟໂຊ 4:30 "ແລະຢ່າເຮັດໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້າເສັຽພຣະທັຍ ເພາະໂດຍພຣະວິນຍານນັ້ນ ທ່ານທັງຫຼາຍໄດ້ຖືກຊົງປະທັບຕາໝາຍໄວ້ ເພື່ອວັນທີ່ຈະຊົງໄຖ່ໃຫ້ພົ້ນ."

1 ໂກຣິນໂທ 2:10 "ແຕ່ພຣະເຈົ້າໄດ້ຊົງສະແດງສິ່ງເຫຼົ່ານັ້ນແກ່ເຮົາທັງຫຼາຍທາງພຣະວິນຍານ ເພາະວ່າພຣະວິນຍານ ຊົງຢັ່ງຮູ້ທຸກສິ່ງ ແມ້ເປັນຂໍ້ເລິກລັບຂອງພຣະເຈົ້າ."

ໂຣມ 8:4 "ເພາະວ່າ ພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫຼະ, ເປັນບຸດຂອງພຣະເຈົ້າ."

**ສະລູບ.** ພຣະເຈົ້າຊົງແບ່ງເປັນສາມພຣະພາກ ຄືພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ເປັນອັນນຶ່ງອັນດຽວກັນບໍ່ສາມາດແຍກຈາກກັນໄດ້. ແລະທັງສາມພຣະພາກນີ້ ຮວມກັນເອີ້ນວ່າ "ພຣະເຈົ້າ" ດັ່ງນັ້ນ ພຣະເຈົ້າຈຶ່ງມີພຽງອົງດຽວ ທີ່ປະກອບດ້ວຍ ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດນັ້ນເອງ.

# ພາກ 2 - ວ່າດ້ວຍມະນຸດ MAN

## ມະນຸດຄືໃຜ ?

## Who is Man ?

### - ຄືຜູ້ທີ່ພຣະເຈົ້າຊົງສ້າງມາ.

ປະຖົມການ 1:26 "ບັດນີ້ ໃຫ້ພວກເຮົາສ້າງມະນຸດ ໃຫ້ມີຮູບຮ່າງຄ້າຍຄືກັບພວກເຮົາ ພວກເຂົາຈະມີອຳນາດ ເໜືອກວ່າປາ ນົກ ສັດປ່າ ແລະສັດເລືອຄານທຸກຊະນິດ.

ປະຖົມການ 2:7 "ເມື່ອນັ້ນພຣະຜູ້ເປັນເຈົ້າຊົງເອົາດິນມາປັ້ນເປັນຮູບຄົນ ແລ້ວເປົ່າລົມຫັນໃຈໃສ່ຮູດັງໃຫ້ມີຊີວິດ ຮູບປັ້ນນັ້ນກໍກາຍເປັນຄົນທີ່ມີຊີວິດຈິດໃຈ."

### - ມະນຸດບໍ່ແມ່ນສັດ ຫຼືພວກດຽວກັນກັບສັດ.

ປະຖົມການ 1:28 "ພຣະອົງຊົງສ້າງຊາຍແລະຍິງ ຄັນແລ້ວພຣະອົງຊົງອວຍພອນໃຫ້ແກ່ເຂົາວ່າ "ຈົ່ງມີລູກເຕົ້າ ໃຫ້ມາກຫຼາຍ ໃຫ້ເຊື້ອສາຍຂອງພວກເຈົ້າມີຢູ່ທົ່ວທຸກແຫ່ງເພື່ອຄຸ້ມຄອງໂລກເຮົາ ໃຫ້ພວກເຈົ້າມີອຳນາດເໜືອກວ່າປາ ນົກ ສັດປ່າ ແລະສັດເລືອຄານທຸກຊະນິດ."

1 ໂກຣິນໂທ 15:39 "ເນື້ອນັ້ນບໍ່ເໝືອນກັນໝົດທຸກຢ່າງ ເນື້ອມະນຸດກໍຢ່າງນຶ່ງ ເນື້ອສັດສີ່ຕີນກໍຢ່າງນຶ່ງ ເນື້ອນົກ ກໍຢ່າງນຶ່ງ ເນື້ອປາ ກໍຢ່າງນຶ່ງ."

ມັດທາຍ 6:26 "ຈົ່ງເບິ່ງນົກປ່າ ມັນບໍ່ໄດ້ຫວ່ານ ບໍ່ໄດ້ເກັບກ່ຽວ ບໍ່ໄດ້ເກັບໃສ່ເລົ້າໄວ້ ແຕ່ພຣະບິດາຂອງທ່ານ ຜູ້ຊົງສະຖິດຢູ່ໃນສວັນ ກໍຍັງຊົງລ້ຽງນົກນັ້ນ ພວກທ່ານກໍປະເສີດຫຼາຍກວ່ານົກບໍ່ແມ່ນຫຼື."

## - ເປັນຜູ້ຮອງລົງມາຈາກພຣະເຈົ້າ ແລະເປັນບຸດຂອງພຣະເຈົ້າ.

ເຮັບເຣີ 2:7 "ພຣະເຈົ້າຊົງບັນດານໃຫ້ມະນຸດນັ້ນຕໍ່າກວ່າເທວະດາພຽງຊົ່ວໄລຍະນຶ່ງ ແລ້ວຊົງເອົາສງ່າຣາສີກັບ ຍົດສັກ ເປັນພວງມາລັຍສວມໃຫ້."

ໂຢຮັນ 1:12 "ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບເອົາພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍປະທານສິດ ໃຫ້ກາຍເປັນບຸດຂອງພຣະເຈົ້າ, ຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອຫຼືການ ຫຼືຄວາມປະສົງຂອງມະນຸດ ແຕ່ເກີດຈາກພຣະເຈົ້າ."

1 ໂຢຮັນ 3:2 "ພວກທີ່ຮັກເອີຍ, ບັດນີ້ເຮົາທັງຫຼາຍເປັນບຸດຂອງພຣະເຈົ້າແລ້ວ ແລະຍັງຊົງບໍ່ໄດ້ສະແດງໃຫ້ຮູ້ຊັດ ວ່າຕໍ່ໄປ ພວກເຮົາຈະເປັນຢ່າງໃດ ແຕ່ພວກເຮົາຮູ້ວ່າ ເມື່ອພຣະອົງສະເດັດມາປາກົດນັ້ນ ເຮົາທັງຫຼາຍຈະເປັນເໝືອນພຣະອົງ ເພາະວ່າ ພວກເຮົາຈະເຫັນພຣະອົງ ຢ່າງທີ່ພຣະອົງຊົງເປັນຢູ່ນັ້ນ."

## - ເປັນຜູ້ທີ່ຮັບເອົາຄວາມຜິດບາບມາໃສ່ຕົວ.

ປະຖົມການ 3:6-7 "ຜູ້ຍິງເຫັນວ່າ ໝາກໄມ້ໃນກົກນັ້ນຊ່ວງງາມ ແລະເປັນຕາຢາກກິນອີຫຼີ ນອກນີ້ນາງຍັງຄິດວ່າ ຈະມີສະຕິ ປັນຍາອີກ ດັ່ງນັ້ນ ນາງຈຶ່ງຕັດສິນໃຈປິດໝາກໄມ້ແລ້ວກິນ ຄັນແລ້ວຈຶ່ງເອົາໝາກໄມ້ນັ້ນໃຫ້ຜົວນາງກິນນຳ ຫຼັງຈາກກິນ ໝາກໄມ້ແລ້ວ ໃນທັນໃດນັ້ນ ພວກເຂົາກໍຮູ້ແຈ້ງເຫັນຈິງ ເພາະສະນັ້ນພວກເຂົາຈຶ່ງຮູ້ວ່າ ພວກຕົນກຳລັງເປືອຍກາຍຢູ່ ດັ່ງນັ້ນ ພວກເຂົາຈຶ່ງພາກັນເອົາ ໃບໄມ້ມາຫຍິບເຂົ້າກັນເຮັດເປັນເຄື່ອງນຸ່ງ."

ໂຣມ 3:10, 23 "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ... ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກ ພຣະຣັສມີ ຂອງພຣະເຈົ້າ."

## - ເປັນຜູ້ຮອງຮັບໂທດກັມ ແລະການສາບແຊ່ງຈາກພຣະເຈົ້າ ຫຼັງຈາກທຳບາບ.

ປະຖົມການ 3:16-19 "ແລ້ວພຣະອົງຊົງກ່າວກັບຜູ້ຍິງວ່າ "ເຮົາຈະເພີ້ມຄວາມຍຸ້ງຍາກໃຫ້ແກ່ເຈົ້າໃນເວລາມີທ້ອງ ແລະເຈົ້າຈະອອກລູກດ້ວຍຄວາມເຈັບປວດ ເຖິງປານນັ້ນເຈົ້າຍັງຢາກໄດ້ຜົວຢູ່ ແລະຜົວນັ້ນຈະເປັນນາຍປົກຄອງເບິ່ງແຍງເຈົ້າ." ຄັນແລ້ວພຣະຜູ້ເປັນເຈົ້າຊົງກ່າວກັບອາດາມວ່າ "ເຈົ້າໄດ້ເຊື່ອຟັງເມຍຂອງເຈົ້າ ເຈົ້າກິນໝາກໄມ້ຊຶ່ງເຮົາໄດ້ຫ້າມ ຍ້ອນສິ່ງທີ່ເຈົ້າ ໄດ້ກະທຳມານັ້ນ ຂີ້ດິນຈະຖືກສາບແຊ່ງ ກ່ອນຈະໄດ້ອາຫານມາລ້ຽງຊີພ ເຈົ້າຈະຕ້ອງເຮັດວຽກຢ່າງໜັກ ຂຸດດິນຟັນໄມ້ ຈົນໜ້າແຫຼ້ ໜ້າກ່ຳເທົ້າສ້ຽງຊີວິດ ກົກໄມ້ແລະພືດຕ່າງໆທີ່ມີໜາມຈະເກີດຂຶ້ນສຳຣັບເຈົ້າ ແລະເຈົ້າຈະກິນພືດນັ້ນເປັນອາຫານ ເຈົ້າຈະຕ້ອງຫາລ້ຽງ ຊີພດ້ວຍເຫື່ອໄຫຼໄຄ້ຍອຍ ຈົນກວ່າເຈົ້າຈະສິ້ນຊີວິດ ກັບຄືນໄປສູ່ດິນບ່ອນທີ່ເຈົ້າມາ ເຈົ້າມາແຕ່ດິນ ເຈົ້າຈະຕ້ອງກັບໄປເປັນດິນອີກ."

ໂຣມ 7:18-23 "ເພາະເຮົາຮູ້ວ່າໃນຕົວເຮົາ ຄືເນື້ອກາຍຂອງເຮົາບໍ່ມີການດີຈັກຢ່າງຢູ່ນຳ ເພາະວ່າເຈຕະນາດີນັ້ນ ເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດ. ດ້ວຍວ່າການດີຊຶ່ງເຮົາປາຖນານັ້ນ ເຮົາບໍ່ໄດ້ເຮັດ ແຕ່ການຊົ່ວທີ່ເຮົາບໍ່ປາຖນາ ເຮັດ ເຮົາກໍຍັງ ເຮັດຢູ່. ຖ້າແມ່ນເຮົາຍັງເຮັດໃນສິ່ງທີ່ເຮົາບໍ່ປາຖນານັ້ນ ກໍບໍ່ແມ່ນຕົວເຮົາເປັນຜູ້ເຮັດ ແຕ່ແມ່ນຄວາມຜິດບາບ ທີ່ອາສັຍຢູ່ໃນຕົວເຮົາ ເປັນຜູ້ເຮັດ. ດັ່ງນັ້ນເຮົາຈຶ່ງເຫັນວ່າ ເປັນກົດທັມມະດາຢ່າງນຶ່ງ ຄືເມື່ອໃດເຮົາຕັ້ງໃຈຈະເຮັດການດີ ຄວາມຊົ່ວກໍມາຕັນເຮົາ. ເພາະວ່າສ່ວນເລິກໃນໃຈເຮົານັ້ນ ກໍປິຕິຍິນດີໃນພຣະບັນຍັດຂອງພຣະເຈົ້າ. ແຕ່ເຮົາເຫັນ ກົດອີກຢ່າງນຶ່ງມີຢູ່ໃນອະວັຍວະຂອງເຮົາ ຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈຂອງເຮົາ."

ໂຣມ 6:23 "ດ້ວຍວ່າ ຄ່າຈ້າງຂອງຄວາມບາບຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດ ອັນຕລອດໄປເປັນນິດໃນພຣະຄຣິສ ຄືພຣະເຢຊູເຈົ້າຂອງພວກເຮົາ."

**- ຄືຜູ້ທີ່ພຣະເຈົ້າຊົງຮັກ ແລະປະທານຄວາມລອດພົ້ນໃຫ້.**

ໂຢຮັນ 3:16 "ເພາະວ່າພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນ ຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ."

ໂຢຮັນ 17:11 "ບັດນີ້ຂ້ານ້ອຍຈະບໍ່ຢູ່ໃນໂລກນີ້ອີກ ແຕ່ເຂົາຍັງຢູ່ໃນໂລກນີ້ ຝ່າຍຂ້ານ້ອຍກຳລັງເມືອຫາພຣະອົງ ແຕ່ເຂົາຍັງຢູ່ໃນໂລກນີ້ ຝ່າຍຂ້ານ້ອຍກຳລັງຈະເມືອຫາພຣະອົງ ໂອ, ພຣະບິດາຜູ້ບໍຣິສຸດ ຂໍພຣະອົງຊົງໂຜດພິທັກຮັກສາເຂົາໄວ້ ໂດຍພຣະນາມຂອງພຣະອົງທີ່ພຣະອົງຊົງປະທານແກ່ຂ້ານ້ອຍນັ້ນ ເພື່ອເຂົາຈະເປັນອັນນຶ່ງອັນດຽວກັນເໝືອນດັ່ງເຮົາທັງສອງ."

ເຮັບເຣີ 10:10 "ແລະໂດຍນ້ຳພຣະທັຍນັ້ນແຫຼະ ທີ່ເຮົາທັງຫຼາຍໄດ້ຊົງຮັບການຊຳຣະໃຫ້ບໍຣິສຸດ ດ້ວຍການຖວາຍ ພຣະກາຍຂອງພຣະເຢຊູຄຣິສເທື່ອດຽວເທົ່ານັ້ນເປັນການສິ້ນສຸດ."

ເຮັບເຣີ 9:27-28 "ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫຼັງຈາກນັ້ນຈະມີການຊົງພິພາກສາສັນໃດ, ພຣະຄຣິສກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງເປັນເຄື່ອງບູຊາເທື່ອດຽວ ເພື່ອແບກບາບຂອງຄົນຈຳນວນຫຼາຍໄວ້ ພຣະອົງຈະຊົງປາກົດເປັນເທື່ອທີສອງໂດຍບໍ່ກ່ຽວກັບບາບ ແຕ່ໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຮົນ ໃຫ້ໄດ້ຮັບຄວາມພົ້ນ."

**ສະລູບ.** ມະນຸດ ເປັນຜູ້ທີ່ມີຮູບຮ່າງແບບລັກສະນະພຣະເຈົ້າ ເປັນຜູ້ຮູ້ດີຊົ່ວຕ່າງໆ ແຕ່ມະນຸດທຳຄວາມຜິດບາບ ແລະໂທດທັນແຫ່ງຄວາມບາບນັ້ນກໍຄືຕ້ອງຕາຍ ແຕ່ພຣະເຈົ້າຊົງຮັກມະນຸດທຸກຄົນ ພຣະອົງຈຶ່ງຊົງເປີດໂອກາດແກ່ມະນຸດ ນຳແຜນການຊ່ວຍກູ້ມະນຸດມາເຜີຍແຜ່ໂດຍພຣະບຸດຂອງພຣະອົງເອງ. ແລະການທີ່ມະນຸດຈະສາມາດພົ້ນຈາກຄວາມຜິດບາບ ແລະສາມາດກັບຄືນຫາແຜ່ນດິນສວັນຂອງພຣະເຈົ້ານັ້ນ ໄດ້ນຳສເນີໃນພາກຕໍ່ໄປ.

# ພາກ 3 - ວ່າດ້ວຍການກັບຄືນຫາພຣະເຈົ້າ: **Repentance**

## ກ. ການກັບໃຈ **Repentance.**

### 1/ການກັບໃຈຄືຫຍັງ? What is the repentance ?

**- ຄືການກັບຄືນ ແລະຄືນດີກັນກັບພຣະເຈົ້າ.**

ເອຊາຢາ 45: 22 "ມະນຸດທຸກມຸມໂລກເອີຍ ຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ວຍພົ້ນເຖີ້ນ ເຮົາເປັນພຣະເຈົ້າ ແຕ່ຜູ້ດຽວບໍ່ມີພຣະເຈົ້າອົງອື່ນ".

**- ຄືການໜີຈາກສິ່ງບໍ່ມີປະໂຫຍດ ແລະຮັບເອົາພຣະເຈົ້າຜູ້ຊົງພຣະຊົນຢູ່.**

ກິຈການ 14: 15 "ທ່ານທັງຫຼາຍເອີຍ, ເຫດສັນໃດຈຶ່ງເຮັດການຢ່າງນັ້ນ ເຮົາທັງສອງ ເປັນມະນຸດທັມມະດາຢ່າງດຽວກັນກັບທ່ານທັງຫຼາຍ ແລະມາປະກາດຂ່າວປະເສີດ ໃຫ້ພວກທ່ານກັບຈາກສິ່ງອັນບໍ່ມີປະໂຫຍດ ໃຫ້ພວກທ່ານມາຫາ ພຣະເຈົ້າຜູ້ຊົງພຣະຊົນຢູ່ ຜູ້ໄດ້ສ້າງຟ້າສວັນ, ແຜ່ນດິນໂລກ, ນ້ຳທະເລ, ແລະສັພສິ່ງທີ່ຢູ່ໃນທີ່ນັ້ນ."

## - ຄືການຮັບເອົາພຣະເຢຊູຄຣິສ ເປັນພຣະຜູ້ຊ່ວຍໃຫ້ລອດ.

ໂຢຮັນ 5:24 "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງເຮົາ ແລະວາງໃຈ ໃນພຣະອົງ ຜູ້ຊົງ ໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດ ແລະບໍ່ເຂົ້າສູ່ການ ພິພາກສາ ແຕ່ໄດ້ຜ່ານພົ້ນຄວາມຕາຍ ໄປສູ່ຊີວິດແລ້ວ."

## - ຄືການທີ່ເປັນຄົນຖືກສ້າງຂຶ້ນໃໝ່.

2 ໂກຣິນໂທ 5:17 "ເຫດສັນນັ້ນ ຖ້າຜູ້ໃດຢູ່ໃນພຣະຄຣິສ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງ ຂຶ້ນໃໝ່ແລ້ວ ຖານະເກົ່າ ເຫຼົ່ານັ້ນກໍລ່ວງໄປ ເບິ່ງແມ້ ກາຍເປັນສິ່ງໃໝ່ທັງນັ້ນ."

## - ຄືການອ່ອຍໜ້າໜີຈາກພຣະທຽມ.

1 ເທຊະໂລນິກ 1:9 "ດ້ວຍວ່າຄົນເຫຼົ່ານັ້ນເອງກໍໄດ້ລາຍງານເຖິງເລື້ອງພວກເຮົາວ່າ ເຮົາໄດ້ເຂົ້າມາຫາເຈົ້າທັງຫຼາຍເປັນຢ່າງໃດ ແລະພວກເຈົ້າໄດ້ອ່ອຍໜ້າໜີຈາກພຣະທຽມມາຫາພຣະເຈົ້າດ້ວຍຢ່າງໃດ ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ ແລະຜູ້ທ່ຽງແທ້."

ອົພຍົບ 20:3-4 "ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ ພວກເຈົ້າ ຢ່າເຮັດຮູບເຄົາຣົບສຳຣັບຕົນ ຫຼືຮູບສິ່ງອື່ນໃດ ທີ່ມີຢູ່ໃນສວັນຊັ້ນຟ້າ ໃນແຜ່ນດິນ ຫຼືໃນນໍ້າລຸ່ມແຜ່ນດິນ ຢ່າຂາບໄຫວ້ຮູບເຫຼົ່ານັ້ນ ເພາະວ່າເຮົາເປັນ ພຣະຜູ້ເປັນເຈົ້າ ຂອງະພວກເຈົ້າ ແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ."

## - ຄືການເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ.

ມັດທາຍ 6:33 "ແຕ່ກ່ອນອື່ນ ທ່ານທັງຫຼາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມ ຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫຼົ່ານີ້ໃຫ້ແກ່ທ່ານ."

ໂກໂລຊາຍ 3:2 "ຈົ່ງເອົາໃຈໃສ່ ສິ່ງຊຶ່ງຢູ່ເບື້ອງເທິງ ບໍ່ໃຊ່ສິ່ງຊຶ່ງຢູ່ແຜ່ນດິນໂລກ".

## - ຄືການປະຖິ້ມສິ່ງທີ່ທ່ວງດຶງທຸກຢ່າງ.

ເຮັບເຣີ 12:1-2 "ເຫດສັນນັ້ນ ເມື່ອເຮົາທັງຫຼາຍມີຝູງພະຍານຫຼວງຫຼາຍຢູ່ອ້ອມຂ້າງຢ່າງນີ້ແລ້ວ ພວກເຮົາຈົ່ງ ຊັດຖິ້ມທຸກຢ່າງທີ່ທ່ວງດຶງຢູ່ ແລະຜິດບາບທີ່ຕິດແໜ້ນໂດຍງ່າຍ ສ່ວນການແລ່ນແຂ່ງທີ່ກຳໜົດໄວ້ຕໍ່ໜ້າພວກເຮົານັ້ນ ຈົ່ງພາກັນແລ່ນດ້ວຍຄວາມພຽນພະຍາຍາມ. ຈົ່ງປັກຕາເບິ່ງພຣະເຢຊູ ຄືຜູ້ບຸກເບີກຄວາມເຊື່ອແລະຜູ້ຊົງເຮັດໃຫ້ຄວາມເຊື່ອຂອງພວກເຮົາ ເຖິງທີ່ສຳເຣັດ ພຣະອົງໄດ້ຊົງອົດທົນຕໍ່ໄມ້ກາງແຂນ ເພາະເຫັນແກ່ຄວາມຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ ພຣະອົງຊົງຖືວ່າ ຄວາມລະອາຍນັ້ນບໍ່ເປັນສິ່ງສຳຄັນ ຈຶ່ງໄດ້ປະທັບລົງເບື້ອງຂວາຂອງພຣະເຈົ້າ."

## - ຄືການຖິ້ມໃຈເກົ່າ ເອົາໃຈໃໝ່ ແລະບັງເກີດໃໝ່ໃນພຣະເຈົ້າ.

ມັດທາຍ 5: 17 "ຈົ່ງຖິ້ມໃຈເກົ່າ ເອົາໃຈໃໝ່ ເພາະຣາຊອານາຈັກສວັນໄດ້ມາໃກ້ແລ້ວ."

ໂຢຮັນ 3:3, 6 "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດໃໝ່ ຜູ້ນັ້ນຈະເຫັນຣາຊແຜ່ນດິນ ຂອງພຣະເຈົ້າບໍ່ໄດ້...ຊຶ່ງເກີດຈາກເນື້ອກາຍ ກໍເປັນເນື້ອກາຍ ຊຶ່ງເກີດຈາກພຣະວິນຍານກໍເປັນວິນຍານ."

**ສະລູບ:** ໂຣມ 3:23 "ດ້ວຍວ່າ ທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ" ມະນຸດເຮົາໄດ້ຫັນໜ້າໜີຈາກພຣະເຈົ້າ ຍອມຮັບເອົາຄວາມຫາຍະນະເຂົ້າໃສ່ຕົວ. ແຕ່ພວກເຮົາກໍດີ້ນຣົນ ເພື່ອຈະຫຼຸດພົ້ນຈາກຄວາມມືດມົວນີ້ ດັ່ງນັ້ນ ທາງດຽວທີ່ທຳໄດ້ ກໍຄື ຕ້ອງຄືນຫາພຣະເຈົ້າ ແລະການຄືນຫາພຣະອົງນັ້ນ ເຮົາຕ້ອງກັບໃຈຂອງເຮົາ ເສັຽໃໝ່ ຫັນໜ້າຈາກຄວາມພິນາດ ສູ່ຊີວິດທີ່ພຣະຄຣິສຊົງປະທານໃຫ້. ຄືການ ກັບຫາພຣະເຈົ້າ ຮັບເອົາການລອດພົ້ນ ຈາກພຣະອົງ ຕ້ອງເປັນຜູ້ທີ່ຖືກສ້າງຂຶ້ນໃໝ່ໃນພຣະຄຣິສ ເອົາໃຈໃສ່ສິ່ງຢູ່ເບື້ອງເທິງ ວອຍໜ້າໜີຈາກພຣະທຽມທັງຫຼາຍ ທີ່ບໍ່ສາມາດຊ່ວຍຫຍັງເຮົາ ໄດ້ນັ້ນຊັດຖິ້ມທຸກຢ່າງທີ່ທ່ວງດຶງເຮົາບໍ່ໃຫ້ກ້າວໄປກັບພຣະເຈົ້າ ແລະສແວງຫາພຣະຄຸນ ແລະຄວາມຊອບທັມຂອງພຣະອົງ ແລະເປັນຜູ້ທີ່ເກີດໃໝ່ ໃຫ້ສົມກັບແຜ່ນດິນສວັນຂອງພຣະເຈົ້າ.

## 2/ ເປັນຫຍັງຈຶ່ງຕ້ອງກັບໃຈ ? Why repent?

### - ເພາະເປັນຄຳສັ່ງຂອງພຣະເຈົ້າ ເພື່ອໃຫ້ເຮົາຢຸດເຊົາໃນການທຳບາບ.

ເອເຊກຽນ 18:30-33 "ອິສຣາເອນເອີຍ, ບັດນີ້ເຮົາ ພຣະຜູ້ເປັນເຈົ້າຈະບອກເຈົ້າວ່າ ເຮົາຈະພິພາກສາພວກເຈົ້າແຕ່ລະຄົນຕາມການກະທຳຂອງໃຜລາວ ຈົ່ງຫຼີກໜີຈາກຄວາມຊົ່ວຮ້າຍທັງປວງທີ່ເຈົ້າກຳລັງເຮັດຢູ່ນັ້ນເສັຽ ຢ່າໃຫ້ບາບທຳລາຍເຈົ້າ ຈົ່ງຫຼີກໜີຈາກການທຳຊົ່ວທັງປວງ ໃຫ້ປ່ຽນຄວາມຄິດແລະຈິດໃຈໃໝ່ເສັຽ ໂອ ອິສຣາເອນເອີຍ ຫຼືວ່າພວກເຈົ້າຢາກຕາຍ ຊັ້ນເບາະ ?" ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປວ່າ "ເຮົາບໍ່ຢາກໃຫ້ຄົນນຶ່ງຄົນໃດຕາຍ ສະນັ້ນຈົ່ງເຊົາເຮັດບາບ ແລະມີຊີວິດຢູ່ເທີ້ນ."

ກິຈການ 17:30 "ໃນສມັຍມະນຸດຍັງໂງ່ບໍ່ຮູ້ຈັກພຣະເຈົ້າ ພຣະອົງກໍບໍ່ຊົງຖືໂທດ ແຕ່ບັດນີ້ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນ ໃຫ້ຖິ້ມໃຈເກົ່າເອົາໃຈໃໝ່."

### - ເພື່ອຮັບເອົາຊີວິດໃໝ່ໃນພຣະຄຣິສ.

ກິຈການ 11:18 "ສ່ວນເຂົາເມື່ອໄດ້ຍິນຄຳນັ້ນກໍອ່ອນຍອມແລ້ວໄດ້ສັຣເສີນພຣະເຈົ້າວ່າ "ຖ້າເປັນດັ່ງນີ້ ກໍແມ່ນພຣະເຈົ້າໄດ້ຊົງໂຜດແກ່ຄົນຕ່າງຊາດ ໃຫ້ຖິ້ມໃຈເກົ່າເອົາໃຈໃໝ່ ເພື່ອເຂົາຈະໄດ້ຊີວິດເໝືອນກັນ."

### - ເພື່ອການຫຼຸດພົ້ນອອກຈາກບ້ວງແຮ້ວຂອງຜີມານ.

2 ຕີໂມທຽວ 2:25-26 "ຊີ້ແຈງໃຫ້ຄົນທີ່ຂັດຂວາງຕໍ່ສູ້ນັ້ນດ້ວຍໃຈອ່ອນສຸພາບວ່າ ພຣະເຈົ້າອາດຊົງໂຜດໃຫ້ເຂົາຖິ້ມໃຈເກົ່າເອົາໃຈໃໝ່ ແລະມາເຖິງການສັງເກດຮູ້ຄວາມຈິງ, ແລະໃຫ້ຮູ້ສຶກຕື່ນຕົວ ຈຶ່ງຫຼຸດພົ້ນຈາກບ້ວງແຮ້ວຂອງມານ ຜູ້ຊຶ່ງຈັບເຂົາໄວ້ໃຫ້ເຮັດຕາມຄວາມປະສົງຂອງມັນ".

### - ເພາະພຣະຄຣິສຊົງເອີ້ນໃຫ້ເຮົາກັບໃຈ.

ມັດທາຍ 9:13 "ເຮົາປະສົງຄວາມເມດຕາ ແລະບໍ່ປະສົງເຄື່ອງບູຊາ ດ້ວຍວ່າເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ."

ພຣະນິມິດ 2:5, 16 "ເຫດສັນນັ້ນ ຈົ່ງຣະນຶກວ່າ ເຈົ້າໄດ້ຕົກໃນສະພາບໃດ ແລ້ວຈົ່ງກັບໃຈເສັຽໃໝ່ ແລະເຮັດຕາມຢ່າງເດີມ ຖ້າບໍ່ດັ່ງນັ້ນເຮົາຈະມາຫາເຈົ້າແລະຍົກເຄື່ອງຮອງຕີນໂຄມຂອງເຈົ້າອອກຈາກບ່ອນມັນ ເວັ້ນແຕ່ເຈົ້າຈະກັບໃຈ ເສັຽໃໝ່ ເຫດສັນນັ້ນ ຈົ່ງກັບໃນເສັຽໃໝ່ ຖ້າບໍ່ດັ່ງນັ້ນ ເຮົາຈະຮີບມາຫາເຈົ້າ ແລະຈະສູ້ຮົບກັບເຂົາເຫຼົ່ານັ້ນດ້ວຍດາບຈາກ ປາກຂອງເຮົາ."

ພຣະນິມິດ 3:3 "ເຫດສັນນັ້ນ ຈົ່ງຈຳໄວ້ວ່າ ເຈົ້າໄດ້ຮັບແລະໄດ້ຍິນຢ່າງໃດ ຈົ່ງຖືຮັກສາແລະກັບໃຈເສັຽໃໝ່ ຖ້າບໍ່ຕື່ນຂຶ້ນ ເຮົາຈະມາຫາເຈົ້າເໝືອນຂະໂມຍ ແລະເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະມາ."

## - ເພາະຕ້ອງການຢາກເປັນບຸດຂອງພຣະເຈົ້າ.

ໂຢຮັນ 1: 12 "ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບເອົາພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມພຣະອົງ ພຣະອົງກໍປະທານສິດ ໃຫ້ກາຍເປັນບຸດຂອງພຣະເຈົ້າ, ຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອຫຼືກາມ, ຫຼືຄວາມປະສົງຂອງມະນຸດ ແຕ່ເກີດຈາກພຣະເຈົ້າ."

## - ເພື່ອຈະຮັບເອົາການລອດພົ້ນທີ່ພຣະເຈົ້າປະທານໃຫ້.

ໂຣມ 6: 23 "ດ້ວຍວ່າຄ່າຈ້າງຂອງຄວາມບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊະທານອັນໂຜດມາແຕ່ພຣະເຈົ້າ ກໍຄື ຊີວິດອັນຕລອດໄປເປັນນິດ ໃນພຣະຄຣິສ ຄືພຣະເຢຊູເຈົ້າຂອງພວກເຮົາ."

ເອເຟໂຊ 2:8 "ດ້ວຍວ່າຊຶ່ງທ່ານທັງຫຼາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ ບໍ່ໃຊ່ ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້".

## - ເພື່ອຮັບຂອງປະທານ ຄືພຣະວິນຍານບໍຣິສຸດ ຈາກພຣະເຈົ້າ.

ກິຈການ 2:37-38 "ຈົ່ງຖິ້ມໃຈເກົ່າ ເອົາໃຈໃໝ່ ແລະຮັບບັບຕິສມາໃນພຣະນາມຂອງພຣະເຢຊູຄຣິສທຸກຄົນ ເພື່ອການ ຊົງ ຍົກບາບ ໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊະທານ ຄືພຣະວິນຍານບໍຣິສຸດ."

**ສະລຸບ:** ໃນເວລາທີ່ເຮົາຈົມຢູ່ໃນຄວາມຜິດບາບ ຜົນແຫ່ງການຜິດບາບນັ້ນກໍຄືຄວາມຫາຍະນະ. ເວລາທີ່ເຮົາກຳລັງ ເດີນທາງ ເຂົ້າສູ່ອັນຕະຣາຍ ພຣະເຈົ້າໄດ້ຊົງເອີ້ນຮຽກພວກເຮົາ ໃຫ້ເຫັນຫົນທາງແຫ່ງຄວາມລອດພົ້ນ, ຊົງສັ່ງໃຫ້ເຮົາຫັນໜີ ຈາກສິ່ງ ຊົ່ວຮ້າຍເຫຼົ່ານັ້ນ, ຊົງຊີ້ຊ່ອງທາງໃຫ້ເຮົາເຫັນຊີວິດອັນຕລອດໄປເປັນນິດ ແຕ່ສິ່ງດຽວທີ່ເຮົາຈະໄດ້ຮັບສິ່ງດັ່ງກ່າວນັ້ນຄື ຄື ເຮົາຕ້ອງກັບໃຈເສັຽໃໝ່.

# 3/ ເຫດຜົນທີ່ເຮົາຄວນກັບໃຈ Reason to repent.

## - ເພາະພຣະເຈົ້າຊົງອົດທົນດົນນານແລ້ວ.

ປະຖົມມະການ 6:3 "ເຮົາຈະບໍ່ອະນຸຍາດໃຫ້ມະນຸດມີຊີວິດຕລອດໄປເປັນນິດ ດ້ວຍເຫດວ່າເຂົາເປັນມະນຸດ ເຂົາຈະເປັນ ຕ້ອງຕາຍ ແຕ່ບັດນີ້ໄປ ພວກເຂົາຈະມີອາຍຸບໍ່ກາຍຮ້ອຍຊາວປີ."

1 ເປໂຕ 3:20 "ຊຶ່ງເມື່ອກ່ອນນັ້ນບໍ່ໄດ້ຍອມເຊື່ອຟັງພຣະເຈົ້າ ຄືເມື່ອພຣະເຈົ້າຊົງສະແດງຄວາມອົດທົນດົນນານ ໃນສມັຍຂອງໂນເອ ຂະນະທີ່ທ່ານກຳລັງສ້າງນາວາຢູ່ ໃນນາວານີຄົນຈຳນວນນ້ອຍ ຄືແປດຄົນ ທີ່ຜ່ານພົ້ນນ້ຳຖ້ວມນັ້ນ."

2 ເປໂຕ 3:9 "ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສັຍຊ້າ ໃນເລື້ອງພຣະສັນຍາຂອງພຣະອົງ ເໝືອນດັ່ງບາງຄົນຄິດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫຼາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ຊົງ ປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃໝ່."

### - ຍ້ອນພຣະກະຣຸນາຂອງພຣະເຈົ້າ.

ໂຣມ 2:4 "ຫຼືວ່າເຈົ້າປະມາດພຣະກະຣຸນາຄຸນອັນສົມບູນ ແລະຄວາມອົດກັ້ນພຣະທັຍ ກັບຄວາມອົດທົນຂອງ ພຣະອົງຫຼື ເຈົ້າບໍ່ຮູ້ຫຼືວ່າ ພຣະກະຣຸນາຄຸນຂອງພຣະເຈົ້ານັ້ນ ຊົງປະສົງຈະນຳເຈົ້າໃຫ້ກັບໃຈເສັຽໃໝ່."

ເອເຟໂຊ 2:8 "ດ້ວຍວ່າ ຊຶ່ງທ່ານທັງຫຼາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນ ໂດຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ ບໍ່ໃຊ່ ທ່ານເຮັດເອົາເອງ ແຕ່ເປັນຂອງປະທານທີ່ມາແຕ່ພຣະເຈົ້າ."

### - ຍ້ອນການຖືກຕີສອນຈາກພຣະເຈົ້າ.

ປະຫວັດກະສັດທີ່ນຶ່ງ 8:46-47 "ຖ້າວ່າໄພ່ພົນຂອງພຣະອົງເຮັດຜິດຕໍ່ພຣະອົງ ເພາະວ່າບໍ່ມີມະນຸດຄົນໃດທີ່ ບໍ່ກະທຳຜິດ ແລະພຣະອົງຊົງພິໂຣດເຂົາ ໂດຍມອບເຂົາໄວ້ໄຕ້ອຳນາດຂອງສັດຕຣູ ດັ່ງນັ້ນ ຜູ້ທີ່ເປັນຝ່າຍຊະນະ ໄດ້ນຳເຂົາໄປ ເປັນຊະເລີຍໃນ ປະເທດອື່ນ ບໍ່ວ່າໃກ້ຫຼືໄກ ຢູ່ໃນປະເທດທີ່ເຂົາຖືກຈັບໄປເປັນຊະເລີຍ ເມື່ອເຂົາສຳນຶກຜິດ ແລະກັບໃຈ.

ພຣະນິມິດ 3:19-20 "ຝ່າຍເຮົາ, ຖ້າຮັກຜູ້ໃດ ເຮົາກໍຕິຽນຂ້ຽນສອນຜູ້ນັ້ນ ຈົ່ງມີໃຈຮ້ອນຮົນ ແລະຕັ້ງໃຈເສັຽໃໝ່ ເບິ່ງແມ້, ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າຫາຜູ້ນັ້ນ ເຮົາຈະຮັບປະທານອາຫານ ຮ່ວມກັບຜູ້ນັ້ນ ແລະຜູ້ນັ້ນຈະຮັບປະທານອາຫານຮ່ວມກັບເຮົາ."

**ສະລູບ:** ເພາະພຣະເຈົ້າບໍ່ຊົງຢາກເຫັນຜູ້ໃດຜູ້ນຶ່ງ ຕ້ອງຈິບຫາຍໃນບຶງໄຟນາຮົກ ພຣະອົງຊົງອົດກັ້ນພຣະທັຍໄວ້ ດົນນານ ທຳທຸກຢ່າງເພື່ອໃຫ້ພວກເຮົາເຫັນທາງທີ່ພຣະອົງຊົງເປີດໃຫ້. ສົມຄວນທີ່ເຮົາຕ້ອງຍອມກັບໃຈເພື່ອເວລາໃດ ການອົດກັ້ນພຣະທັຍ ຂອງພຣະອົງໝົດໄປ ເຮົາຈະສາມາດຮັບຄວາມລອດພົ້ນນັ້ນຈາກພຣະອົງ.

## 4/ ການກະທຳຂອງພຣະເຈົ້າ ເພື່ອໃຫ້ມະນຸດກັບໃຈ.

## Actions from God for Man to repent.

### - ຊົງໃຫ້ຜູ້ຮັບໃຊ້ຂອງພຣະອົງອອກໄປປ່າວປະກາດ.

ມັດທາຍ 28:18-20 "ອຳນາດທັງໝົດໃນສວັນ ແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ. ເຫດສັນນັ້ນ ພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ທຸກຊາດເປັນລູກສິດ ໃຫ້ເຂົາຮັບສົມບັບຕິສມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາ ສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫຼະ, ເຮົາຢູ່ກັບທ່ານທັງຫຼາຍ ທຸກໆວັນ ຈົນໝົດກັບ."

ກິຈການ 26:17-18 "ເຮົາຈະໂຜດເຈົ້າໃຫ້ພົ້ນຈາກພົລເມືອງນີ້ ແລະຈາກຄົນຕ່າງຊາດທີ່ເຮົາຈະໃຊ້ເຈົ້າໄປຫານັ້ນ, ເພື່ອຈະໃຫ້ເຈົ້າໄຂຕາເຂົາ ເພື່ອເຂົາຈະກັບຈາກຄວາມມືດມາເຖິງຄວາມສວ່າງ ແລະຈາກອຳນາດຂອງຊາຕານມາເຖິງພຣະເຈົ້າ ເພື່ອເຂົາ ຈະໄດ້ຮັບການໃຫ້ອະພັຍຄວາມຜິດບາບ ເພື່ອຈະໄດ້ມີສ່ວນດ້ວຍກັນກັບຄົນທັງຫຼາຍທີ່ຖືກຊຳຣະໃຫ້ບໍຣິສຸດ ໂດຍຄວາມເຊື່ອ ໃນເຮົານັ້ນ."

### - ຊົງໃຊ້ຄວາມທຸກຍາກ ແລະການທຳລາຍ ເພື່ອເຕືອນໃຫ້ມະນຸດກັບໃຈ.

ເພັງສັຣເສີນ 78:34 "ເມື່ອພຣະອົງຊົງສັງຫານເຂົາ ເຂົາກໍສແວງຫາພຣະອົງ ເຂົາກັບມາສແວງຫາພຣະເຈົ້າ ດ້ວຍໃຈ ຮ້ອນຮົນ."

ປະຖົມມະການ 7:1-4 "ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂນອາວ່າ "ເຈົ້າພ້ອມຄອບຄົວຂອງເຈົ້າທັງໝົດຈົ່ງເຂົ້າໄປ ໃນເຮືອເຖີດ ເຮົາໄດ້ເຫັນວ່າ ເຈົ້າເປັນຜູ້ຊອບທັມ ແລະແມ່ນເຈົ້າຜູ້ດຽວໃນຈຳນວນພວກປະຊາຊົນເຫຼົ່ານີ້ທີ່ເຮົາພໍໃຈ ຈົ່ງເອົາສັດ ທີ່ບໍ່ມີມົນທິນແນວລະຄູ່ ແລະເອົາສັດທີ່ມີມົນທິນແນວລະຄູ່ ນົກຊະນິດລະເຈັດຄູ່ ເພາະເຮົາຢາກໃຫ້ສັດເຫຼົ່ານີ້ມີຊີວິດຢູ່ ແລະອອກແມ່ແຜ່ລູກຕໍ່ໄປໃນໂລກ ໃນເຈັດມື້ຂ້າງໜ້າ ເຮົາຈະໃຫ້ຝົນຕົກມາໃນໂລກສີ່ສິບມື້ ສີ່ສິບຄືນ ແລ້ວເຮົາຈະໃຫ້ທຸກສິ່ງ ທີ່ມີຊີວິດຊຶ່ງເຮົາໄດ້ສ້າງມານັ້ນ ຈິບຫາຍໄປ."

ປະຖົມມະການ 19:12-13 "ຊາຍທັງສອງຖາມໂລດວ່າ "ເຈົ້າມີໃຜອີກແດ່ຢູ່ໃນເມືອງນີ້? ຈົ່ງເອົາພວກລູກຊາຍ ພວກລູກສາວແລະພີ່ນ້ອງຂອງເຈົ້າອອກຈາກເມືອງນີ້ໄວ ເພາະວ່າພວກເຮົາກຳລັງຈະທຳລາຍເມືອງນີ້ ພຣະຜູ້ເປັນເຈົ້າໄດ້ຍິນສຽງຟ້ອງຮ້ອງອັນໜ້າຢ້ານກົວຕໍ່ສູ້ປະຊາຊົນເຫຼົ່ານີ້ ຈຶ່ງໃຊ້ພວກເຮົາມາທຳລາຍເມືອງໄຊໂດມນີ້.""

## - ພຣະອົງຊົງໃຫ້ມະນຸດມີຄວາມຮູ້ສຶກສຳນຶກຜິດຕົວເອງ.

ເພງສັຣເສີນ 119:59 "ຂ້ານ້ອຍໄດ້ພິຈາຣະນາການດຳເນີນຊີວິດຂອງຂ້ານ້ອຍແລ້ວ ແລະສັນຍາວ່າຈະເຮັດຕາມກົດຣະບຽບຂອງພຣະອົງ."

ລູກາ 15:17-19 "ເມື່ອລາວຮູ້ເນື້ອຄີງແລ້ວຈຶ່ງເວົ້າວ່າ "ລູກຈ້າງຂອງພໍ່ເຮົາມີຫຼາຍຄົນ ເຂົາຍັງມີອາຫານກິນອີ່ມ ຈົນເຫຼືອ ສ່ວນເຮົາຈະມາຕາຍອຶດຢາກຢູ່ທີ່ນີ້. ຈຳເປັນເຮົາຈະຕ້ອງລຸກກັບຄືນໄປຫາພໍ່ຂອງເຮົາ ແລ້ວຈະເວົ້ານຳເພິ່ນວ່າ "ພໍ່ເອີຍ, ລູກໄດ້ເຮັດຜິດຕໍ່ສວັນແລະຕໍ່ພໍ່ແລ້ວ ແລະບໍ່ສົມຄວນຈະໄດ້ເອີ້ນຊື່ວ່າເປັນລູກອີກຕໍ່ໄປ ແຕ່ໃຫ້ລູກເປັນເໝືອນລູກຈ້າງຂອງພໍ່ ຄົນນຶ່ງທ້ອນ."""

## - ເຮັດໃຫ້ເກີດຄວາມຕ້ອງການທີ່ຈະພົ້ນບາບ ແລະສແວງຫາທາງແຫ່ງຄວາມພົ້ນນັ້ນ.

ກິຈການ 3:19 "ເຫດສັນນັ້ນ ທ່ານທັງຫຼາຍຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລ້ວຫຼົບລ່າວຕ່າວຄືນ ເພື່ອພຣະເຈົ້າຈະຊົງລົບລ້າງຄວາມຜິດບາບຂອງພວກທ່ານເສັຽ."

ກິຈການ 8:22 "ເຫດສັນນັ້ນ ຈົ່ງຫຼົບຕັ້ງໃຈໃໝ່ຈາກການຊົ່ວຂອງເຈົ້ານີ້ ແລະອ້ອນວອນຂໍອົງພຣະຜູ້ເປັນເຈົ້າ ເພື່ອຫວັງວ່າພຣະອົງຈະ ຊົງໂຜດຍົກຄວາມຜິດບາບທີ່ເຈົ້າຄຶດໃນໃຈນັ້ນເສັຽ."

ສຸພາສິດ 28:13 "ຖ້າເຈົ້າພະຍາຍາມປິດບັງບາບໄວ້ ຊີວິດຂອງເຈົ້າກໍຈະບໍ່ຈະເຣີນ ຈົ່ງສາຣະພາບ ແລະປ່ຽນໃຈເສັຽ ແລ້ວພຣະເຈົ້າຈະຊົງສຳແດງພຣະກະຣຸນາຕໍ່ເຈົ້າ."

# 5/ ໃຜແດ່ ທີ່ປະກາດເລື້ອງການກັບໃຈ? Who call for us to repent?

## - ປະກາດໂດຍພຣະເຢຊູຄຣິສເອງ.

ມັດທາຍ 4:17 "ຕັ້ງແຕ່ນັ້ນມາ ພຣະເຢຊູຊົງຕັ້ງຕົ້ນປະກາດວ່າ "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ເພາະຣາຊອານາຈັກສວັນໄດ້ມາໃກ້ແລ້ວ."

ມາຣະໂກ 1:15 "ເວລາກຳໜົດມາເຖິງແລ້ວ ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າ ເອົາໃຈໃໝ່ ແລະເຊື່ອໃນຂ່າວປະເສີດ."

ໂຢຮັນ 3:3 "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃໝ່ ຜູ້ນັ້ນຈະເຫັນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້."

### - ປະກາດໂດຍທ່ານໂຢຮັນບັບຕິສໂຕ.

ມັດທາຍ 3:1-2, 11-12 "ຄາວນັ້ນ ໂຢຮັນບັບຕິສໂຕ ມາປະກາດໃນປ່າແຂວງຢູດາຍວ່າ, "ຈົ່ງຖິ້ມໃຈເກົ່າ ເອົາໃຈໃໝ່ ເພາະວ່າຣາຊອານາຈັກສວັນໄດ້ມາໃກ້ແລ້ວ....ຝ່າຍເຮົາ ເຮົາໃຫ້ພວກທ່ານຮັບບັບຕິສມາດ້ວຍນໍ້າ ໝາຍເຖິງການ ຖິ້ມໃຈເກົ່າເອົາໃຈໃໝ່ ແຕ່ຜູ້ທີ່ຈະມາພາຍຫຼັງເຮົາ ກໍມີຣິດກວ່າເຮົາອີກ ຊຶ່ງເຮົາບໍ່ສົມຄວນຈະຈັບເກີບຂອງເພິ່ນໄປ ຝ່າຍຜູ້ນັ້ນ ຈະໃຫ້ພວກທ່ານຮັບບັບຕິສມາດ້ວຍພຣະວິນຍານບໍຣິສຸດ ແລະດ້ວຍໄຟ. ມືຂອງຜູ້ນັ້ນຖືດ້ຶງຟັດເຂົ້າ ເພິ່ນຈະເຮັດລານເຂົ້າ ຂອງຕົນໃຫ້ກ້ຽງດີ ແລະຈະຮອບຮອມເຂົ້າເມັດດີຂອງຕົນໃສ່ໄວ້ໃນເລົ້າ ແຕ່ເຂົ້າລີບນັ້ນ ເພິ່ນຈະເຜົາເສັຽດ້ວຍໄຟທີ່ບໍ່ຮູ້ມອດ."

### - ປະກາດໂດຍເຫຼົ່າອັຄສາວົກຂອງພຣະເຢຊູຄຣິສ.

ມາຣະໂກ 6:7, 12 "ພຣະອົງໄດ້ຊົງເອີ້ນສິບສອງຄົນນັ້ນມາ ແລ້ວຊົງຕັ້ງຕົ້ນໃຊ້ເຂົາໃຫ້ອອກໄປເປັນຄູ່ໆ ແລະຊົງປະທານໃຫ້ເຂົາມີອຳນາດເໜືອຜີຖ່ອຍຮ້າຍ....ຝ່າຍພວກສິດກໍພາກັນອອກໄປປະກາດໃຫ້ຄົນທັງຫຼາຍຖິ້ມໃຈເກົ່າ ເອົາໃຈໃໝ່."

ກິຈການ 2:38-39 "ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສມາ ໃນພຣະນາມຂອງພຣະເຢຊູຄຣິສທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ. ດ້ວຍວ່າ ພຣະສັນຍານັ້ນ ກໍມີໄວ້ແກ່ທ່ານທັງຫຼາຍ, ກັບລູກຫຼານຂອງພວກທ່ານ, ແລະແກ່ຄົນທັງປວງ ທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ."

### - ປະກາດໂດຍ ຄຣິສຕຽນທີ່ເຊື່ອພຣະເຈົ້າທຸກຄົນ.

ໂຣມ 1:3-4, 16-17 "ຂ່າວປະເສີດນັ້ນ ກ່ຽວກັບພຣະຣາຊບຸດຂອງພຣະອົງ ຄືພຣະເຢຊູຄຣິສເຈົ້າຂອງເຮົາທັງຫຼາຍ ຜູ້ຊົງບັງເກີດໃນເຊື້ອວົງຂອງດາວິດຝ່າຍເນື້ອກາຍ, ແຕ່ຝ່າຍພຣະວິນຍານແຫ່ງຄວາມບໍຣິສຸດນັ້ນ ຊົງບົ່ງໄວ້ດ້ວຍຣິດທານຸພາບ ຄືໂດຍການທີ່ພຣະເຈົ້າໄດ້ຊົງບັນດານໃຫ້ເປັນຂຶ້ນມາຈາກຕາຍ ວ່າເປັນພຣະບຸດຂອງພຣະເຈົ້າ.... ເພາະວ່າເຮົາບໍ່ມີຄວາມລະອາຍ ໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນ ເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ, ພວກຢິວກ່ອນ ແລະພວກຕ່າງຊາດດ້ວຍ. ເພາະໃນຂ່າວປະເສີດນັ້ນ ພຣະເຈົ້າໄດ້ຊົງສະແດງໃຫ້ມີຄວາມຊອບທັມດ້ວຍອາສັຍຄວາມເຊື່ອ ແຕ່ສິ່ງດຽວ ເໝືອນມີຄຳຂຽນໄວ້ໃນພຣະຄຳພີວ່າ, "ຜູ້ທີ່ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫຼະ, ຈະໄດ້ຊີວິດ"

**ສະລູບ.** ມັດທາຍ 28: 18-19 "ອຳນາດທັງໝົດໃນສວັນ ແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ. ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສມາໃນພຣະນາມແຫ່ງ ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາ ສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫຼະ, ເຮົາຢູ່ກັບທ່ານທຸກໆວັນຈົນໝົດກັບ." ການປະກາດ ເປັນໜ້າທີ່ຂອງທຸກຄົນທີ່ເຊື່ອໃນພຣະເຈົ້າ ແລະນີ້ເປັນຄຳສັ່ງຂອງພຣະເຢຊູຄຣິສເອງ.

## 6/ ເປັນຫຍັງຈຶ່ງຕ້ອງປະກາດ? Why do we need to proclaim?

### - ເພາະເປັນຄຳສັ່ງຂອງພຣະເຢຊູຄຣິສ.

ມັດທາຍ 28:20 "ສັ່ງສອນເຂົາໃຫ້ຖືຮັກສາ ສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫຼະ, ເຮົາຢູ່ກັບທ່ານທຸກໆວັນ ຈົນໝົດກັບ."

### - ເພື່ອທຸກຄົນຈະຮູ້ເຖິງ ວິທີທາງທີ່ຈະເຂົ້າສູ່ແຜ່ນດິນສວັນຂອງພຣະເຈົ້າ.

ມັດທາຍ 18:3 "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າພວກທ່ານບໍ່ກັບໃຈ ແລະກາຍເປັນເໝືອນເດັກນ້ອຍ ທ່ານຈະເຂົ້າໃນຣາຊແຜ່ນດິນສວັນບໍ່ໄດ້ຈັກເທື່ອ."

ໂຢຮັນ 14:6 "ເຮົານີ້ແຫຼະ ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ ນອກຈາກມາທາງເຮົາ."

### - ເພື່ອເຮັດໃຫ້ສວັນມີຄວາມຍິນດີ ທີ່ເຫັນຄົນບາບກັບໃຈ.

ລູກາ 15:7, 10 "ດັ່ງນັ້ນແຫຼະ, ເຮົາບອກທ່ານທັງຫຼາຍວ່າ ຈະມີຄວາມປິຕິໃນສວັນ ເພາະເຫັນແກ່ຄົນນອກສິນທັມ ຄົນດຽວທີ່ຖິ້ມໃຈເກົ່າເອົາໃຈໃໝ່ ຫຼາຍກວ່າຈະຍິນດີກັບຄົນສິນທັມເກົ້າສິບຄົນ ທີ່ບໍ່ຕ້ອງການຖິ້ມໃຈເກົ່າເອົາໃຈໃໝ່... ດັ່ງນັ້ນແຫຼະ, ເຮົາບອກພວກທ່ານທັງຫຼາຍວ່າ ຈະມີຄວາມປິຕິຍິນດີໃນທ່າມກາງພວກເທວະດາຂອງພຣະເຈົ້າ ເພາະເຫັນແກ່ຄົນ ນອກສິນທັມ ຄົນດຽວທີ່ຖິ້ມໃຈເກົ່າເອົາໃຈໃໝ່."

### - ເພື່ອໃຫ້ຊີວິດຂອງຜູ້ທີ່ກັບໃຈ ໄດ້ຮັບຜົນສຳເຣັດ.

ມັດທາຍ 3:8 "ເຫດສັນນັ້ນ ຈົ່ງປະຕິບັດໃຫ້ໄດ້ຜົນ ສົມກັບການຖິ້ມໃຈເກົ່າ ເອົາໃຈໃໝ່."

ເອຊາຢາ 1:16-17 "ຈົ່ງຊຳຣະລ້າງຕົວຂອງເຈົ້າໃຫ້ສະອາດ ໃຫ້ຢຸດການກະທຳຊົ່ວຮ້າຍທີ່ເຮົາເຫັນຢູ່ນີ້ເສັຽ ໃຫ້ຝຶກແອບ ກະທຳຄວາມດີ ສະແຫວງຫາຄວາມຍຸຕິທັມ ຊ່ວຍເຫຼືອຜູ້ຖືກກົດຂີ່ຂົ່ມເຫັງ ຄຸ້ມຄອງຮັກສາລູກກຳພ້າ ແລະຊ່ວຍເບິ່ງແຍງພວກແມ່ໝ້າຍ"

ຟີລິປອຍ 3:12-14 "ບໍ່ໃຊ່ວ່າເຮົາໄດ້ຮັບແລ້ວ ຫຼືວ່າເຖິງທີ່ສຳເຣັດແລ້ວ ແຕ່ເຮົາກຳລັງບາກບັ່ນ ມຸ້ງໜ້າໄປ ເພື່ອຈະໄດ້ຮັບ ເອົາເປັນຂອງຕົນ ເໝືອນດັ່ງພຣະເຢຊູຄຣິສໄດ້ຊົງຮັບເຮົາໄວ້ເປັນຂອງພຣະອົງແລ້ວ. ພີ່ນ້ອງທັງຫຼາຍເອີຍ ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງທີ່ຜ່ານພົ້ນໄປເສັຽແລ້ວ ແລະໂນ້ມຕົວອອກໄປຫາສິ່ງທັງຫຼາຍທີ່ຢູ່ ເບື້ອງໜ້າ. ເຮົາກຳລັງບາກບັ່ນມຸ້ງໜ້າ ໄປສູ່ຫຼັກໄຊ ເພື່ອຈະໄດ້ຮັບຣາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເຮົາໃນພຣະເຢຊູຄຣິສ ໃຫ້ໄປຮັບຢູ່ເບື້ອງເທິງ."

**ສະລຸບ:** ຈຳເປັນທີ່ເຮົາຈະຕ້ອງສືບຕໍ່ປະກາດເລື້ອງການກັບໃຈຕລອດໄປ ເພາະຊີວິດເຮົາດຳຣົງຢູ່ກັບສະພາບແວດລ້ອມ ທີ່ເຕັມໄປດ້ວຍຄວາມຜິດບາບ ແລະການທົດລອງ ດັ່ງນັ້ນ ເພື່ອເຮົາຈະໃກ້ຊິດກັບພຣະເຈົ້າຕລອດໄປ ການປະກາດຈະຕ້ອງ ດຳເນີນໄປຈົນເຖິງທີ່ສຸດປາຍແຜ່ນດິນໂລກ. ມັດທາຍ 24:14 "ຂ່າວປະເສີດເລື້ອງຣາຊອານາຈັກນີ້ ຈະໄດ້ປະກາດໄປທົ່ວໂລກ ເພື່ອເປັນຄຳພະຍານແກ່ທຸກໆຊາດ ແລ້ວທີ່ສຸດປາຍແຜ່ນດິນໂລກຈະມາເຖິງ."

## 7 / ສ່ວນປະກອບໃນການກັບໃຈ. Elements of the repentance.

### - ຕ້ອງປະກອບດ້ວຍການອ່ອນນ້ອມຖ່ອມໃຈ.

2 ພົງສາວະດານ 7:14 "ຖ້າໄພ່ພົນຂອງເຮົາຈະຖ່ອມຕົວລົງ ອະທິຖານຕໍ່ເຮົາ ແລະຫັນໜ້າໜີຈາກທາງຊົ່ວຂອງເຂົາ ເຮົາກໍຈະຟັງເຂົາຈາກສວັນ ແລະຈະອະພັຍໂທດບາບແກ່ເຂົາ ແລະຈະຮັກສາແຜ່ນດິນຂອງເຂົາໃຫ້ຈະເຣີນຮຸ່ງເຮືອງ."

ຢາໂກໂບ 4: 9-10 "ຈົ່ງເປັນທຸກໂສກເສົ້າ, ຈົ່ງຮ້ອງໄຫ້ແລະຄ່ຳໄຮ ໃຫ້ການຫົວຂອງຕົນກັບກາຍເປັນການໂສກເສົ້າ ແລະໃຫ້ຄວາມຍິນດີ ກັບກາຍເປັນຄວາມເສົ້າໝອງ. ເຈົ້າທັງຫຼາຍຈົ່ງຖ່ອມໃຈລົງຕໍ່ພຣະພັກອົງພຣະຜູ້ເປັນເຈົ້າ ແລະພຣະອົງຈະ ຊົງຍົກຊູພວກເຈົ້າຂຶ້ນ."

## - ປະກອບດ້ວຍການສຳນຶກຜິດບາບຂອງຕົນເອງ.

ເຢເຣມີຢາ 31:19 "ພວກຂ້ານ້ອຍໄດ້ຫຼີກໜີຈາກພຣະອົງ ແຕ່ບໍ່ເຫິງພວກຂ້ານ້ອຍກໍຢາກຄືນມາອີກ ຫຼັງຈາກທີ່ພຣະອົງຊົງລົງໂທດແລ້ວ ພວກຂ້ານ້ອຍກໍຕີຕົນເອງດ້ວຍຄວາມເສັຽ ແລະຮູ້ສຶກລະອາຍຂາຍໜ້າ ເພາະວ່າໄດ້ເຮັດບາບ ເມື່ອຄາວຍັງໜຸ່ມ."

ດານີເອນ 9:8-9 "ຂ້າແດ່ພຣະເຈົ້າ ພວກກະສັດ ພວກຜູ້ປົກຄອງ ແລະບັນພະບຸຣຸດຂອງພວກຂ້ານ້ອຍ ໄດ້ກະທຳສິ່ງທີ່ໜ້າອັບອາຍ ແລະສິ່ງທີ່ເປັນບາບຕໍ່ສູ້ພຣະອົງ ພຣະອົງຊົງເມດຕາ ແລະຊົງໃຫ້ອະພັຍ ແຕ່ພວກຂ້ານ້ອຍໄດ້ກະບົດຕໍ່ສູ້ພຣະອົງ."

1 ໂຢຮັນ 1:8-9 "ຖ້າເຮົາທັງຫຼາຍເວົ້າວ່າພວກເຮົາບໍ່ມີບາບ ພວກເຮົາກໍຫຼອກລວງຕົນເອງ ແລະຄວາມຈິງ ບໍ່ໄດ້ຢູ່ໃນເຮົາ. ຖ້າເຮົາທັງຫຼາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບ ຂອງພວກເຮົາ ແລະຈະຊົງຊຳຣະລ້າງເຮົາທັງຫຼາຍຈາກການອະທັມໝົດສິ້ນ."

## - ປະກອບດ້ວຍການເຊື່ອ, ວາງໃຈ, ແລະຟັງຄວາມພຣະເຈົ້າ.

ເອຊາຢາ 1:18-20 "ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຂໍໃຫ້ພວກເຮົາມາເວົ້າກັນເທາະ ຄືເຖິງແມ່ນບາບຂອງເຈົ້າຈະເປັນ ສີແດງ ເຮົາກໍຈະລ້າງໃຫ້ຂາວສະອາດເໝືອນນອນຝ້າຍ ແລະເຖິງມັນຈະແດງເຂັ້ມ ເຮົາກໍຈະເຮັດໃຫ້ຂາວເໝືອນຂົນແກະ ຖ້າເຈົ້າເຊື່ອຟັງເຮົາ ເຈົ້າຈະໄດ້ກິນຂອງດີໃນແຜ່ນດິນ ແຕ່ຖ້າເຈົ້າປະຕິເສດແລະດື້ດຶງ ເຈົ້າຈະໄດ້ຮັບໂທດເຖິງຕາຍ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫຼະ."

ມັດທາຍ 21:32 "ເພາະວ່າໂຢຮັນໄດ້ມາຫາພວກທ່ານສອນທາງສິນທັມ ແຕ່ພວກທ່ານບໍ່ໄດ້ເຊື່ອ ສ່ວນພວກ ເກັບພາສີ ແລະຍິງແມ່ຈ້າງໄດ້ເຊື່ອເພິ່ນ ຝ່າຍພວກທ່ານ, ເຖິງແມ່ນໄດ້ເຫັນດັ່ງນັ້ນແລ້ວ ພາຍຫຼັງກໍບໍ່ໄດ້ຫຼີບໃຈເຊື່ອເພິ່ນ."

ມາຣະໂກ 1:15 "ເວລາກຳໜົດມາເຖິງແລ້ວ ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຈົ່ງເຊື່ອໃນຂ່າວປະເສີດ."

ໂຢຮັນ 5:24 "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງເຮົາ ແລະວາງໃຈໃນພຣະອົງຜູ້ຊົງ ໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດ ແລະບໍ່ເຂົ້າໃນການພິພາກສາ ແຕ່ໄດ້ຜ່ານພົ້ນຄວາມຕາຍໄປສູ່ຊີວິດແລ້ວ.

ໂຣມ 10:9-10 "ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າໄດ້ຊົງບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ. ເຫດວ່າທີ່ມະນຸດ ໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງຖືວ່າເປັນຄົນຊອບທັມ ແລະທີ່ຍອມຮັບກໍຮັບດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນ."

ໂຢຮັນ 11:25 "ເຮົານີ້ແຫຼະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອຢູ່ໃນເຮົາ ເຖິງແມ່ນຕາຍໄປແລ້ວກໍຍັງຈະມີຊີວິດຢູ່."

## - ປະກອບດ້ວຍການຫັນໜ້າໜີຈາກຄວາມຜິດບາບ.

ໂຣມ 6:12-14 "ເຫດສັນນັ້ນ ຕໍ່ໄປຢ່າໃຫ້ຄວາມຜິດບາບປົກຄອງຮ່າງກາຍທີ່ຕ້ອງຕາຍຂອງເຈົ້າທັງຫຼາຍ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ, ຢ່າມອບອະວັຍະວະຂອງພວກເຈົ້າໃຫ້ແກ່ຄວາມຜິດບາບຕໍ່ໄປ ເພື່ອໃຫ້ເປັນ ເຄື່ອງໃຊ້ໃນການອະທັມ ແຕ່ຈົ່ງມອບຕົວຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເໝືອນກັບບຸກຄົນທີ່ເປັນຂຶ້ນມາ ຈາກຕາຍແລ້ວ ແລະຈົ່ງມອບອະວັຍະວະຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເພື່ອເປັນເຄື່ອງໃຊ້ໃນການຊອບທັມຕໍ່ໄປ ດ້ວຍວ່າຕໍ່ໄປຄວາມຜິດບາບຈະບໍ່ບັງຄັບພວກເຈົ້າອີກ ເພາະວ່າເຈົ້າທັງຫຼາຍບໍ່ໄດ້ຢູ່ໃຕ້ພຣະບັນຍັດ ແຕ່ຢູ່ໃຕ້ພຣະຄຸນ."

ເອຊາຢາ 1:17 "ໃຫ້ຢຸດການກະທຳຊົ່ວທີ່ເຮົາເຫັນຢູ່ນີ້ເສັຽ ໃຫ້ຝຶກແອບກະທຳຄວາມດີ ແລະສແວງຫາຄວາມຍຸຕິທັມ ຊ່ວຍເຫຼືອຜູ້ທີ່ຖືກກົດຂີ່ຂົ່ມເຫັງ ຄຸ້ມຄອງຮັກສາລູກກຳພ້າ ແລະຊ່ວຍເບິ່ງແຍງພວກແມ່ໝ້າຍ."

**- ປະກອບດ້ວຍການອະທິຖານ ແລະນະມັສການພຣະເຈົ້າອົງທ່ຽງແທ້ພຽງອົງດຽວ.**

ກິຈການ 8:22 "ເຫດສັນນັ້ນ ຈົ່ງຫັນປ່ຽນໃຈໃໝ່ຈາກການຊົ່ວຂອງເຈົ້ານີ້ ແລະອ້ອນວອນຂໍອົງພຣະຜູ້ເປັນເຈົ້າ ເພື່ອຫວັງວ່າພຣະອົງຈະຊົງຍົກຄວາມຜິດບາບທີ່ເຈົ້າຄິດໃນໃຈນັ້ນເສັຽ."

ໂຢຮັນ 4:24 "ພຣະເຈົ້າຊົງເປັນພຣະວິນຍານ ຜູ້ທີ່ນະມັສການພຣະອົງ ຕ້ອງນະມັສການດ້ວຍຈິດວິນຍານ ແລະຄວາມຈິງ."

ອົພຍົບ 20:1-11 "ພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳຕໍ່ໄປນີ້ວ່າ "ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ. ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ ພວກເຈົ້າຢ່າເຮັດຮູບເຄົາຣົບສຳຣັບຕົນ ຫຼືຮູບສິ່ງໃດສິ່ງນຶ່ງທີ່ມີຢູ່ໃນສວັນຊັ້ນຟ້າ ໃນແຜ່ນດິນ ຫຼືໃນນ້ຳລຸ່ມແຜ່ນດິນ ຢ່າຂາບໄຫວ້ຮູບເຫຼົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະເປັນພຣະເຈົ້າຜູ້ ຫວງແຫນພວກເຈົ້າ ເຮົາຈະລົງໂທດລູກຫຼານຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ ແຕ່ຈະສະແດງຄວາມຮັກໝັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະຕໍ່ຜູ້ທີ່ປະພຶດຕາມພຣະບັນຍັດຂອງເຮົາສືບໄປຫຼາຍຊົ່ວອາຍຸພັນຄົນ. ພວກເຈົ້າຢ່າໃຊ້ຊື່ພຣະເຈົ້າຂອງເຈົ້າໄປໃນທາງທີ່ຜິດ ເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່ຜິດ. ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ຫົກມື້ ແຕ່ມື້ຖ້ວນເຈັດໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າຂອງເຈົ້າ ໃນມື້ນີ້ ໃຫ້ເຈົ້າເອງ ພ້ອມດ້ວຍລູກຊາຍຍິງ ຂ້ອຍທາດແລະສັດລ້ຽງຂອງພວກເຈົ້າ ຕລອດເຖິງຄົນຕ່າງດ້າວທີ່ອາສັຍຢູ່ໃນບ້ານເມືອງຂອງເຈົ້າ ຢຸດເຮັດວຽກທັງໝົດ ໃນຫົກມື້ນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງສ້າງຟ້າສວັນ ແຜ່ນດິນໂລກທະເລ ແລະທຸກສິ່ງສາຣະພັດ ທີ່ມີຢູ່ໃນສານແຫ່ງນີ້ ແຕ່ວັນຖ້ວນເຈັດພຣະອົງໄດ້ຢຸດພັກ ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຈຶ່ງໄດ້ອວຍພອນໃຫ້ມື້ຖ້ວນເຈັດ ເປັນວັນບໍຣິສຸດສຳຣັບພຣະອົງ."

**ສະລຸບ.** ການກັບໃຈ ເປັນສິ່ງຈຳເປັນສຳຣັບມະນຸດ ເພື່ອຮັບການລອດພົ້ນ ແລະມີສ່ວນໃນແຜ່ນດິນສວັນຂອງພຣະເຈົ້າ

# ຂ. ຄືນດີກັນກັບພຣະເຈົ້າ **Reconciliation**

## 1/ ເປັນຫຽັງຈຶ່ງຕ້ອງຄືນດີກັບພຣະເຈົ້າ? Why do we need to reconcile?

**- ເພາະຖືກຂັບໄລ່ອອກຈາກສວນເອເດັນ ແລະຕ້ອງການກັບຄືນຫາທີ່ນັ້ນອີກ.**

ປະຖົມມະການ 3:22-24 "ຫຼັງຈາກນັ້ນຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວວ່າ "ບັດນີ້ ມະນຸດໄດ້ກາຍເປັນເໝືອນ ພວກເຮົາໄດ້ຮູ້ຈັກການດີ ແລະການຊົ່ວ ເຂົາຈະບໍ່ໄດ້ກິນໝາກໄມ້ທີ່ໃຫ້ມີຊີວິດຕລອດໄປເປັນນິດອີກ" ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຂັບໄລ່ເຂົາອອກຈາກສວນເອເດັນ ໃຫ້ເຮັດວຽກຂຸດດິນຟັນໄມ້ ແລະທຳນາຫາກິນໃນບ່ອນທີ່ກຳເນີດມາ. ເມື່ອພຣະເຈົ້າໄດ້ ຂັບໄລ່ມະນຸດອອກຈາກສວນແລ້ວ ພຣະອົງໄດ້ຊົງແຕ່ງຕັ້ງເທວະດາ ເຊຣູບິມ ທາງທິດຕາເວັນອອກຂອງສວນ ແລະດາບ ທີ່ມີແສງໄຟແກວ່ງໄປໃນທົ່ວທຸກທິດ ເພື່ອປ້ອງກັນບໍ່ໃຫ້ຜູ້ນຶ່ງຜູ້ໃດ ເຂົ້າໄປໃກ້ກົກໄມ້ທີ່ມີຊີວິດຕລອດໄປເປັນນິດນັ້ນ."

**- ເພາະພົບກັບຄວາມທຸກຍາກໃນໂລກ ແລະຕ້ອງການກັບສູ່ສະຖານອັນອຸດົມສົມບູນໃນເມື່ອກ່ອນ.**

ປະຖົມມະການ 3:16-19 "ແລ້ວພຣະອົງຊົງກ່າວກັບຜູ້ຍິງນັ້ນວ່າ "ເຮົາຈະເພີ້ມຄວາມຍຸ້ງຍາກໃຫ້ແກ່ເຈົ້າ ເວລາມີທ້ອງ ແລະຈະໃຫ້ເຈົ້າອອກລູກດ້ວຍຄວາມເຈັບປວດ ເຖິງປານນັ້ນ ເຈົ້າຍັງຢາກໄດ້ຜົວຢູ່ ແລະຜົວນັ້ນຈະເປັນນາຍ ປົກຄອງເບິ່ງແຍງເຈົ້າ" ຄັນແລ້ວພຣະຜູ້ເປັນເຈົ້າ ຊົງກ່າວກັບອາດາມວ່າ "ເຈົ້າໄດ້ເຊື່ອຟັງເມັຽຂອງເຈົ້າ ເຈົ້າກິນໝາກໄມ້ ຊຶ່ງເຮົາໄດ້ຫ້າມ ຍ້ອນສິ່ງທີ່ເຈົ້າ

ໄດ້ກະທຳນາັ້ນ ຂີ້ດິນຈະຖືກສາບແຊ່ງ ກ່ອນຈະໄດ້ອາຫານມາລ້ຽງຊີພ ເຈົ້າຈະຕ້ອງເຮັດວຽກ ຢ່າງໜັກ ຂຸດດິນຟັນໄມ້ຈົນໜ້າແຫຼ້ໜ້າກ່ຳ ເຫົ້າສ້ຽງຊີວິດ ກົກໄມ້ແລະພືດຕ່າງໆທີ່ມີໜາມຈະເກີດຂຶ້ນສຳຣັບເຈົ້າ ແລະເປັນອາຫານ ຂອງເຈົ້າ ເຈົ້າຈະຕ້ອງຫາລ້ຽງຊີພດ້ວຍ ເຫື່ອໄຫຼໄຄຍ້ອຍ ຈົນກວ່າເຈົ້າຈະສິ້ນຊີວິດ ກັບຄືນໄປສູ່ດິນບ່ອນເຈົ້າມາ ເຈົ້າມາແຕ່ດິນ ເຈົ້າຈະຕ້ອງກັບໄປເປັນດິນອີກ."

ເພັງສັຣເສີນ 27:4 "ຂ້ານ້ອຍໄດ້ທູນຂໍພຽງສິ່ງດຽວຕໍ່ພຣະຜູ້ເປັນເຈົ້າ ຄືອາສັຍຢູ່ໃນວິຫານຂອງພຣະອົງຕລອດຊົ່ວ ຊີວິດຂອງຂ້ານ້ອຍ ເພື່ອເບິ່ງຄວາມດີຂອງພຣະອົງ ແລະທູນຂໍການນຳພາຂອງພຣະອົງຢູ່ທີ່ນັ້ນ".

ເຮັບເຣີ 11:13-15 "ສ່ວນຄົນເຫຼົ່ານັ້ນ, ໄດ້ຕາຍໄປໃນຂະນະທີ່ມີຄວາມເຊື່ອ ໂດຍບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ ແຕ່ເຂົາກໍໄດ້ເຫັນ ແລະໄດ້ຕ້ອນຮັບໄວ້ຕັ້ງແຕ່ໄກ ແລະຍອມຕົວວ່າ ເຂົາເປັນພຽງແຕ່ແຂກເມືອງທີ່ທ່ອງທ່ຽວໄປມາໃນໂລກ. ເພາະຄົນທີ່ເວົ້າຢ່າງນີ້ ກໍສະແດງໃຫ້ເຫັນຄັກແລ້ວວ່າ ເຂົາກຳລັງສແວງຫາບ້ານເມືອງຂອງຕົນ. ຈິງແທ້, ຖ້າເຂົາຄິດເຖິງ ບ້ານເມືອງ ທີ່ເຂົາຈາກມາແລ້ວນັ້ນ ເຂົາກໍຄົງຈະມີໂອກາດກັບຄືນໄດ້. ແຕ່ບັດນີ້ ເຂົາປາຖນາທີ່ຈະຢູ່ໃນເມືອງອັນປະເສີດກວ່ານັ້ນ ຄືເມືອງສວັນ."

## 2/ ຄວາມຜິດບາບ ຂອງມະນຸດ. The Sin of Man.

### - ຄວາມຜິດບາບ ເກີດຍ້ອນຫຍັງ ?

ປະຖົມມະການ 2:16-17 "ພຣະອົງຊົງສັ່ງແກ່ຜູ້ຊາຍນັ້ນວ່າ "ໝາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ໝົດ ເວັ້ນໄວ້ ແຕ່ກົກທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ກົກນີ້ ເຈົ້າຈະເຖິງແກ່ຄວາມຕາຍ."

ປະຖົມມະການ 3:4-7 "ງູຈຶ່ງຕອບວ່າ "ບໍ່ເປັນຄວາມຈິງ ພວກເຈົ້າຈະບໍ່ຕາຍດອກ ພຣະເຈົ້າເວົ້າເຊັ່ນນັ້ນ ກໍເພາະພຣະອົງ ຊົງຮູ້ດີວ່າ ເມື່ອໃດເຈົ້າກິນໝາກໄມ້ນັ້ນ ເຈົ້າຈະຮູ້ແຈ້ງເຫັນຈິງ ກັບຈະຮູ້ການດີ ແລະການຊົ່ວເໝືອນດັ່ງພຣະອົງ." ຜູ້ຍິງເຫັນວ່າໝາກໄມ້ກົກນັ້ນຊ່າງງາມແລະເປັນໜ້າຢາກກິນອີຫຼີ ນອກນີ້ຍັງຄິດວ່າຈະມີສະຕິປັນຍາອີກ ດັ່ງນັ້ນ ນາງຈຶ່ງຕັດສິນໃຈ ປິດໝາກໄມ້ແລ້ວກິນ ຄັນແລ້ວ ຈຶ່ງເອົາໝາກໄມ້ນັ້ນໃຫ້ຜົວນາງກິນນຳ ຫຼັງຈາກກິນໝາກໄມ້ແລ້ວ ໃນທັນໃດນັ້ນ ພວກເຂົາກໍຮູ້ແຈ້ງ ເຫັນຈິງ ເພາະສະນັ້ນພວກເຂົາຈຶ່ງຮູ້ວ່າ ພວກຕົນກຳລັງເປືອຍກາຍຢູ່ ດັ່ງນັ້ນ ພວກເຂົາຈຶ່ງພາກັນເອົາໃບໄມ້ ມາຫຍິບເຂົ້າກັນເຮັດເປັນ ເຄື່ອງນຸ່ງ."

### - ຄວາມຜິດບາບ ເຂົ້າມາສູ່ມະນຸດໃນໂລກໄດ້ແບບໃດ ?

ໂຣມ 5:12 "ເຫດສັນນັ້ນ ຄວາມຜິດບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຄົນດຽວ ແລະຄວາມຕາຍກໍໄດ້ເກີດມາ ຍ້ອນຄວາມຜິດບາບນັ້ນ."

ໂຣມ 3:10-12, 23 "ບໍ່ມີຄົນຊອບທັມ ຈັກຄົນນຶ່ງຄົນດຽວ. ບໍ່ມີຄົນເຂົ້າໃຈ ບໍ່ມີຄົນສແວງຫາພຣະເຈົ້າ. ທຸກຄົນໄດ້ ຫຼົງເວັ້ນໄປ ເຂົາພາກັນເປັນຄົນຊົ່ວໄປໝົດ ຜູ້ເຮັດການດີ ບໍ່ມີຈັກຄົນດຽວ. ລຳຄໍຂອງເຂົາຄືຂຸມຝັງຊາກຊົພທີ່ໄຂຢູ່ ເຂົາໃຊ້ລີ້ນຂອງເຂົາ ໃນການລໍ້ລວງ ມີພິດງູຮ້າຍຢູ່ໃຕ້ຮີມປາກຂອງເຂົາ. ປາກຂອງເຂົາເຕັມໄປດ້ວຍຄຳປ້ອຍດ່າແລະຄຳຂົມຂື່ນ ຕີນຂອງເຂົາວ່ອງໄວໃນການ ເຮັດໃຫ້ນອງເລືອດ. ເຂົາຍ່ອນຖິ້ມຄວາມເສັຽຫາຍ ແລະຄວາມທຸກໄວ້ໃນທາງທີ່ເຂົາເດີນໄປ ແລະເຂົາບໍ່ໄດ້ຮູ້ຈັກຫົນທາງແຫ່ງ ຄວາມສຸກ. ເຂົາບໍ່ເຄີຍຄິດທີ່ຈະຢຳເກງພຣະເຈົ້າ..... ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈະພຣະຣັສມີຂອງພຣະເຈົ້າ."

ໂຣມ 6:23 "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄື ຊີວິດອັນຕລອດໄປເປັນນິດໃນພຣະຄຣິສ ຄືພຣະເຢຊູເຈົ້າຂອງພວກເຮົາ." - ມະນຸດຈະຮູ້ໄດ້ແບບໃດ ວ່າຕົນເອງເປັນຄົນຜິດບາບ ?

ໂຢຮັນ 16:8-9 "ເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫຼະ, ຈະຊົງບັນດານໃຫ້ໂລກຮູ້ແຈ້ງໃນເຣື້ອງ ຄວາມຜິດບາບ, ຄວາມຊອບທັມ, ແລະການພິພາກສາ. ໃນເຣື້ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາ."

ໂຣມ 7:18-23 "ເພາະເຮົາຮູ້ວ່າໃນຕົວເຮົາ ຄືເນື້ອກາຍຂອງເຮົາບໍ່ມີການດີຈັກຢ່າງຢູ່ນຳ ເພາະວ່າເຈຕະນາດີນັ້ນ ເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດ. ດ້ວຍວ່າການດີຊຶ່ງເຮົາປາຖນານັ້ນ ເຮົາບໍ່ໄດ້ເຮັດ ແຕ່ການຊົ່ວທີ່ເຮົາບໍ່ປາຖນາ ຢາກເຮັດ ເຮົາກໍຍັງເຮັດຢູ່. ຖ້າແມ່ນເຮົາຍັງເຮັດໃນສິ່ງທີ່ເຮົາບໍ່ປາຖນາຢາກເຮັດນັ້ນ ກໍບໍ່ແມ່ນຕົວເຮົາເປັນຜູ້ເຮັດ ແຕ່ແມ່ນຄວາມຜິດບາບ ທີ່ອາສັຍຢູ່ໃນຕົວເຮົາເປັນຜູ້ເຮັດ. ດັ່ງນັ້ນ ຈຶ່ງເຫັນວ່າ ເປັນກົດທັມມະດາຢ່າງນຶ່ງ ຄືເມື່ອໃດເຮົາຕັ້ງໃຈ ຈະເຮັດການດີ ຄວາມຊົ່ວ ກໍມາຕັນເຮົາ. ເພາະວ່າສ່ວນເລິກໃນໃຈຂອງເຮົານັ້ນ ກໍປິຕິຍິນດີໃນພຣະບັນຍັດຂອງພຣະເຈົ້າ. ແຕ່ເຮົາເຫັນກົດອີກຢ່າງນຶ່ງທີ່ມີ ຢູ່ໃນອະວັຍຍະວະຂອງເຮົາ ຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈຂອງເຮົາ ແລະຜູ້ເຮົາໄວ້ໃຕ້ບັງຄັບກົດແຫ່ງ ຄວາມຜິດບາບຊຶ່ງຢູ່ໃນອະວັຍຍະວະ ຂອງເຮົາ."

ໂຣມ 3:20 "ເພາະວ່າໃນສາຍພຣະເນດຂອງພຣະເຈົ້າ ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຜູ້ຊອບທັມດ້ວຍການ ເຮັດຕາມ ພຣະບັນຍັດ ເພາະວ່າພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ."

ອົບພະຍົບ 20:1-15 "ຢ່າມີພຣະອື່ນນອກຈາກເຮົາເລີຍ...ຢ່າເຮັດຮູບເຄົາຣົບສຳຣັບຕົນ ຢ່າຂາບໄຫວ້ຮູບເຫຼົ່ານັ້ນ ເພາະວ່າ ເຮົາເປັນພຣະເຈົ້າຂອງເຈົ້າ...ຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ ເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ຂອງເຮົາ ໄປໃນທາງ ທີ່ຜິດ. ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຈົ່ງນັບຖືບິດາມານດາຂອງເຈົ້າ ຢ່າຂ້າຄົນ ຢ່າລ່ວງເກີນ ຜົວເມັຍຜູ້ອື່ນ ຢ່າລັກຊັບ...ຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ...ຢ່າໂລບສິ່ງໃດໆ ທີ່ເປັນຂອງເພື່ອນບ້ານ."

## - ຜົນສະທ້ອນຂອງຄວາມບາບ.

ໂຣມ 3:23 "ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ."

ໂຣມ 6:23 "ດ້ວຍວ່າ ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ແຕ່ຂອງພຣະຣາຊທານ ອັນໂຜດມາແຕ່ພຣະເຈົ້າ ກໍຄື ຊີວິດອັນຕລອດໄປເປັນນິດໃນພຣະຄຣິສ ຄືພຣະເຢຊູເຈົ້າຂອງພວກເຮົາ."

ໂຣມ 1:29-32 "ພວກເຂົາເຕັມໄປດ້ວຍການອະທັມທຸກຢ່າງ, ການຊົ່ວຮ້າຍ, ຄວາມໂລບ, ຄວາມປອງຮ້າຍ, ເຕັມໄປດ້ວຍຄວາມເຫິງສາ, ການຂ້າຟັນ, ການວິວາດ, ການລໍ້ລວງ, ການຜູກພະຍາບາດ, ການສັບສໍ່, ການເວົ້ານິນທາ, ການກຽດ ຊັງພຣະເຈົ້າ, ຂີ້ອັ່ງໝິ່ນປມາດ, ຈອງຫອງ, ອວດຕົວ, ປະດິດຄິດແຕ່ງການຊົ່ວຂຶ້ນ, ບໍ່ຟັງຄວາມພໍ່ແມ່, ໃຈບໍ່ສັງເກດການດີແລະ ໝຊົ່ວ, ບໍ່ຖືຄຳໝັ້ນສັນຍາ, ຂາດຄວາມຮັກທັມມະດາ, ບໍ່ມີຄວາມເມດຕາເອັນດູ, ເຖິງແມ່ນວ່າ ເຂົາຮູ້ຈັກຂໍ້ບັນຍັດຂອງພຣະເຈົ້າລັກ ທີ່ກ່າວວ່າ ຄົນທັງປວງທີ່ເຮັດຢ່າງນັ້ນກໍສົມຄວນຕາຍ ເຖິງປານນັ້ນເຂົາກໍຍັງເຮັດຢູ່ ແລະທັງເຫັນພ້ອມກັບຄົນທີ່ເຮັດຢ່າງນັ້ນດ້ວຍ."

ພຣະນິມິດ 20:12-15 "ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ນ້ອຍແລະຜູ້ໃຫຍ່ ຢືນຢູ່ຕໍ່ໜ້າບັນລັງນັ້ນ ແລະໜັງສືຕ່າງໆກໍໄຂອອກ ມີໜັງສືອີກເຫຼັ້ມນຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດ ແລະຄົນທັງຫຼາຍທີ່ຕາຍແລ້ວກໍຖືກຊົງພິພາກສາ ຕາມການປະຕິບັດຂອງເຂົາທີ່ຂຽນໄວ້ໃນໜັງສືເຫຼົ່ານັ້ນ. ທະເລກໍສົ່ງຄົນທັງຫຼາຍທີ່ຕາຍໃນທະເລຄືນ ຄວາມຕາຍ ແລະແດນມໍຣະນາ ກໍສົ່ງຄົນທັງຫຼາຍທີ່ຢູ່ໃນແດນນັ້ນຄືນ ເຂົາທັງປວງກໍຖືກຊົງພິພາກສາຕາມການປະຕິບັດຂອງຕົນທຸກຄົນ.
ຄວາມຕາຍແລະແດນມໍຣະນາກໍຖືກຖິ້ມລົງໃນບຶງໄຟ ບຶງໄຟນີ້ແຫຼະ ເປັນຄວາມຕາຍຄັ້ງທີ່ສອງ ຖ້າຜູ້ໃດບໍ່ມີຊື່ຈົດໄວ້ ໃນທະບຽນແຫ່ງ ຊີວິດ ຜູ້ນັ້ນກໍຖືກຖິ້ມລົງໃນບຶງໄຟ."

**ສະລູບ:** ເພາະມະນຸດ ຂາດການເຊື່ອຟັງພຣະເຈົ້າ ທຳໃນສິ່ງທີ່ພຣະເຈົ້າຫວງຫ້າມ. ການບໍ່ເຊື່ອຟັງ ໄດ້ເປັນບໍ່ເກີດແຫ່ງ ຄວາມຜິດບາບ "ລູກເຕົ້າບໍ່ຟັງຄວາມພໍ່ແມ່ ຜີແມ່ເຂົ້າໝໍ້ນາຮົກ". ເຮົາເລືອກທີ່ຈະຟັງຄຳຍົວະເຍົ້າຂອງມານ ແທນທີ່ຈະຟັງຄຳ ພຣະເຈົ້າ. ດັ່ງນັ້ນ ຄວາມຜິດບາບນີ້ ແມ່ນຕົວເຮົາເປັນຜູ້ເລືອກເອົາເອງ. ແລະຜົນສະທ້ອນຂອງຄວາມຜິດບາບນັ້ນ ໄດ້ນຳມາຊຶ່ງ

ຄວາມຕາຍ ແລະຄວາມຕາຍນັ້ນກໍເກີດຂຶ້ນກັບມະນຸດທຸກຄົນ. ແຕ່ພຣະເຈົ້າຊົງຮັກມະນຸດສເມີ ດັ່ງນັ້ນ ເສັ້ນທາງແຫ່ງການ ລອດພົ້ນຂອງມະນຸດ ຈຶ່ງຍັງພໍມີຢູ່. ແຕ່ການລອດພົ້ນນັ້ນ, ມະນຸດຈະບໍ່ສາມາດທຳດ້ວຍຕົນເອງ ແຕ່ພຣະເຈົ້າເທົ່ານັ້ນ ຈະທຳໄດ້.

## 3/ ການຂັດຂືນພຣະເຈົ້າ Disobedience to God.

### - ຄືການບໍ່ຮັກສາຄຳໝັ້ນສັນຍາຂອງເຮົາຕໍ່ພຣະເຈົ້າ ແລະບໍ່ປະຕິບັດຕາມຄຳສັ່ງຂອງພຣະອົງ.

ເພງສັຣເສີນ 78:10 "ເຂົາທັງຫຼາຍ ບໍ່ໄດ້ຮັກສາຄຳໝັ້ນສາຍາຂອງພວກເຂົາຕໍ່ພຣະເຈົ້າ ແລະປະຕິເສດທີ່ຈະ ປະຕິບັດຕາມພຣະບັນຍັດຂອງພຣະອົງ".

ມັດທາຍ 7:21 "ບໍ່ແມ່ນໝົດທຸກຄົນທີ່ກ່າວແກ່ເຮົາວ່າ ' ພຣະອົງເຈົ້າ, ພຣະອົງເຈົ້າ ' ຈະໄດ້ເຂົ້າແຜ່ນດິນສວັນ ເຂົ້າໄດ້ແຕ່ຜູ້ທີ່ເຮັດຕາມນ້ຳພຣະທັຍພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນ".

ຊາມູເອນນຶ່ງ 13:13 "ຊາມູເອນຕອບຂຶ້ນວ່າ "ເປັນການໂງ່ງ່າວທີ່ສຸດ ທີ່ເຮັດຢ່າງນີ້ ພຣະອົງບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະຜູ້ເປັນເຈົ້າ ຖ້າວ່າພຣະອົງຫາກເຊື່ອຟັງພຣະອົງແລ້ວ ພຣະຜູ້ເປັນເຈົ້າຈະໃຫ້ພຣະອົງ ແລະເຊື້ອສາຍຂອງພຣະອົງ ປົກຄອງຣາຊອານາຈັກອິສຣາເອນຕລອດໄປ."

### - ເຮັດໃຫ້ຄວາມໂປດປານຂອງພຣະເຈົ້າໝົດໄປ.

ຊາມູເອນນຶ່ງ 13:14 "ແຕ່ວ່າດຽວນີ້ ຍ້ອນພຣະອົງບໍ່ເຊື່ອຟັງພຣະເຈົ້າ ພຣະອົງຈຶ່ງຈະບໍ່ຍືນຍາວຕໍ່ໄປ ພຣະຜູ້ເປັນເຈົ້າ ຈະສົ່ງຊາຍຜູ້ນຶ່ງທີ່ພຣະອົງຊົງພໍພຣະທັຍ ແລະຈະຊົງແຕ່ງຕັ້ງໃຫ້ລາວປົກຄອງໄພ່ພົນຂອງພຣະອົງ."

ມັດທາຍ 13:49-50 "ໃນຄາວສຸດໂລກກໍຈະເປັນຢ່າງນັ້ນແຫຼະ ພວກເທວະດາຈະອອກມາແຍກຄົນຊົ່ວ ອອກຈາກຄົນສິນທັມ. ແລ້ວຈະເອົາໄປຖິ້ມໃສ່ເຕົາໄຟຮ້ອນກ້າ ທີ່ນັ້ນຈະມີການຮ້ອງໄຫ້ ກັດແຂ້ວຄຽ້ວຟັນ."

### - ເຮັດໃຫ້ຕ້ອງຖືກທຳລາຍດ້ວຍພຣະພິໂຣດຂອງພຣະເຈົ້າ.

ພຣະນິມິດ 16:1 "ແລ້ວຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ ສັ່ງເທວະດາເຈັດຕົນນັ້ນວ່າ "ຈົ່ງໄປເສັຽເອົາຂັນທັງເຈັດໜ່ວຍທີ່ເຕັມໄປດ້ວຍພຣະພິໂຣດຂອງພຣະເຈົ້າ ຖອກລົງເທິງແຜ່ນດິນໂລກ.

ພຣະນິມິດ 8: 6-13 "ແລະເທວະດາເຈັດຕົນທີ່ຖືແກທັງເຈັດນັ້ນ ຕ່າງກໍຕຽມພ້ອມທີ່ຈະເປົ່າ. ເມື່ອເທວະດາຕົນແຣກເປົ່າຂຶ້ນ ໝາກເຫັບແລະໄຟປົນເລືອດຖືກຖິ້ມລົງມາຍັງແຜ່ນດິນ ແຜ່ນດິນໂລກຖືກໄໝ້ເສັຽນຶ່ງສ່ວນສາມ, ຕົ້ນໄມ້ຖືກໄໝ້ເສັຽນຶ່ງສ່ວນສາມ, ແລະຫຍ້າຂຽວສົດຖືກໄໝ້ເສັຽທັງໝົດ. ເມື່ອເທວະດາຕົນທີສອງເປົ່າແກຂຶ້ນ ກໍມີສິ່ງນຶ່ງເໝືອນພູໜ່ວຍໃຫຍ່ທີ່ໄຟກຳລັງໄໝ້ຢູ່ ຖືກຖິ້ມລົງໃນທະເລ ແລະທະເລນັ້ນກາຍເປັນເລືອດເສັຽນຶ່ງສ່ວນສາມ. ສາຣະພັດໃນທະເລທີ່ມີຊີວິດກໍ ຕາຍເສັຽນຶ່ງສ່ວນສາມ ແລະບັນດາເຮືອສະເພົາກໍຖືກທຳລາຍເສັຽນຶ່ງສ່ວນສາມ. ເມື່ອເທວະດາຕົນທີສາມເປົ່າແກຂຶ້ນ ກໍມີດາວ ໜ່ວຍໃຫຍ່ດວງນຶ່ງ ລຸກເປັນໄຟເໝືອນກະບອງຕົກຈາກທ້ອງຟ້າ ດາວນັ້ນຕົກໃສ່ແມ່ນ້ຳນຶ່ງສ່ວນສາມ ແລະຕົກໃສ່ພູທັງຫຼາຍ. ດາວດວງນີ້ມີຊື່ວ່າ ຣັບຊິນໂຕ ຣົດຂອງນ້ຳຈຶ່ງກາຍເປັນຣົດຂົມນຶ່ງສ່ວນສາມ ແລະຄົນຈຳນວນຫຼາຍໄດ້ຕາຍໄດ້ຕາຍເພາະນ້ຳຂົມນັ້ນ ເມື່ອເທວະດາຕົນທີສີ່ເປົ່າແກຂຶ້ນ ດວງອາທິດກໍຖືກທຳລາຍເສັຽນຶ່ງສ່ວນສາມ ດວງຈັນ ແລະດວງດາວທັງຫຼາຍກໍເໝືອນກັນ ຈຶ່ງມືດໄປເຖິງນຶ່ງສ່ວນສາມ ກາງເວັນບໍ່ສວ່າງໄປນຶ່ງສ່ວນສາມ ແລະກາງຄືນກໍເໝືອນກັນ. ແລ້ວຂ້າພະເຈົ້າກໍເບິ່ງ ແລະໄດ້ຍິນອິນຊີໂຕນຶ່ງທີ່ບິນຢູ່ໃນທ້ອງຟ້າ ຮ້ອງດັງຂຶ້ນວ່າ "ວິບັດ ວິບັດ ວິບັດຈະມີແກ່ຄົນທັງຫຼາຍທີ່ຢູ່ເທິງແຜ່ນດິນໂລກ ເພາະສຽງແກທີ່ເຫຼືອ ເພາະເທວະດາສາມຕົນຈວນຈະເປົ່ານັ້ນ"

ພຣະນິມິດ 9: 1-6, 13-15 "ເມື່ອເທວະດາຕົນທີຫ້າເປົ່າແກຂຶ້ນ ຂ້າພະເຈົ້າກໍເຫັນດາວດວງນຶ່ງຕົກຈາກຟ້າ ລົງມາຍັງແຜ່ນດິນໂລກ ໄດ້ຮັບພຣະຣາຊທານຂໍກະແຈສຳຣັບປ່ອງເຫວເລິກ. ເມື່ອດາວດວງນັ້ນໄຂປ່ອງເຫວອອກ ກໍມີຄວັນ ພຸ່ງຂຶ້ນມາຈາກ

ເຫວນັ້ນເໝືອນຄວັນທີ່ເຕົາໃຫຍ່ ດວງອາທິດແລະອາກາດກໍມືດໄປເພາະເຫດຄວັນທີ່ຂຶ້ນມາຈາກເຫວນັ້ນ. ມີຝູງຕັກແຕນບິນອອກຈາກຄວັນນັ້ນມາຍັງແຜ່ນດິນໂລກ ພຣະເຈົ້າຊົງພຣະຣາຊທານອຳນາດແກ່ຕັກແຕນນັ້ນ ເໝືອນກັບອຳນາດ ແມງງອດທີ່ແຜ່ນດິນໂລກ. ພຣະເຈົ້າຊົງຫ້າມມັນບໍ່ໃຫ້ທຳຮ້າຍຫຍ້າເທິງແຜ່ນດິນໂລກ ສິ່ງຂຽວສົດຫຼືຕົ້ນໄມ້ໃດໆ ແຕ່ໃຫ້ ທຳຮ້າຍຄົນເຫຼົ່ານັ້ນທີ່ບໍ່ມີປະທັບຕາຂອງພຣະເຈົ້າທີ່ໜ້າຜາກຂອງເຂົາເທົ່ານັ້ນ.....ເມື່ອເທວະດາຕົນທີ່ຫົກເປົ່າແກຂຶ້ນ ຂ້າພະເຈົ້າ ໄດ້ຍິນສຽງອອກມາຈາກຮູບເຂົາທີ່ແຈທັງສີ່ຂອງແທ່ນຄຳຊຶ່ງຢູ່ຕໍ່ພຣະພັກພຣະເຈົ້ານັ້ນ, ສັ່ງແກ່ເທວະດາຕົນທີຫົກທີ່ຖືແກນັ້ນວ່າ "ຈົ່ງແກ້ປ່ອຍເທວະດາທັງສີ່ ຊຶ່ງຖືກມັດໄວ້ທີ່ແມ່ນ້ຳໃຫຍ່ ຢູຟາເຕ ນັ້ນເສັຽ." ເທວະດາເຫຼົ່ານັ້ນຖືກປ່ອຍໄປແລ້ວ ຄືເທວະດາທັງສີ່ ທີ່ພຣະເຈົ້າຊົງຈັດແຈ່ງໄວ້ສຳຣັບຊົ່ວໂມງ, ວັນ, ເດືອນ, ແລະປີນັ້ນ ເພື່ອໄປຂ້າມະນຸດນຶ່ງສ່ວນສາມເສັຽ."

ພຣະນິມິດ 10:7 "ແຕ່ໃນເວລາທີ່ເທວະດາຕົນທີ່ເຈັດອອກສຽງ ຄືເວລາເປົ່າແກນັ້ນ ຄວາມເລິກລັບຂອງພຣະເຈົ້າທີ່ພຣະອົງຊົງປະກາດເປັນຂ່າວປະເສີດແກ່ພວກຂ້ອຍໃຊ້ຂອງພຣະອົງ ຄືພວກຜູ້ທຳນວຍນັ້ນກໍຈະສຳເຣັດຜົນ."

## 4/ຄວາມລອດພົ້ນທີ່ມາຈາກພຣະເຈົ້າ Salvation from God.

**- ມະນຸດ ພຽງລຳພັງຕົນເອງບໍ່ສາມາດພົ້ນຈາກບາບໄດ້.**

ໂຣມ 7:14-15 "ພວກເຮົາແລ້ວວ່າ ພຣະບັນຍັດນັ້ນເປັນມາໂດຍຝ່າຍພຣະວິນຍານ ແຕ່ວ່າເຮົານີ້ເປັນແຕ່ມະນຸດທັມມະດາຊຶ່ງຖືກຂາຍໄວ້ຢູ່ໃຕ້ຄວາມຜິດບາບ. ເຮົາບໍ່ເຂົ້າໃຈການທີ່ເຮົາເຄີຍເຮັດຢູ່ ເພາະວ່າ ເຮົາ ບໍ່ເຮັດຕາມສິ່ງທີ່ເຮົາປາຖນາ ແຕ່ເຮົາກັບໄປເຮັດໃນສິ່ງທີ່ເຮົາກຽດຊັງນັ້ນ."

ຄາລາເຕັຽ 2:16 "ແຕ່ພວກເຮົາກໍຍັງຮູ້ຢູ່ວ່າ ບໍ່ມີຜູ້ໃດຖືກຊົງຖືວ່າຊອບທັມໂດຍປະຕິບັດຕາມພຣະບັນຍັດ ແຕ່ໂດຍທາງຄວາມເຊື່ອໃນພຣະເຢຊູຄຣິສເທົ່ານັ້ນ ເຖິງແມ່ນພວກເຮົາກໍຍັງເຊື່ອໄວ້ໃຈໃນພຣະຄຣິສ ຄືພຣະເຢຊູ ເພື່ອຈະໄດ້ ຊົງຖືວ່າເປັນຄົນຊອບທັມໂດຍຄວາມເຊື່ອໃນພຣະຄຣິສ ບໍ່ໃຊ່ໂດຍການປະຕິບັດຕາມພຣະບັນຍັດ ເພາະໂດຍການປະຕິບັດຕາມ ພຣະບັນຍັດນັ້ນ "ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຄົນຊອບທັມໄດ້."

TO BE CONTINUED